ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ມີນາ 2024
ປີທີ 13
ສະບັບທີ 962
ລາຍສັບປະດາ

## ສະພາແຫ່ງຊາດ ປັບປຸງກົງຈັກການຈັດຕັ້ງຈຳນວນໜຶ່ງ



(ສພຊ) ຕອນບ່າຍວັນພະຫັດທີ 14 ມີນາ 2024 ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ການປັບປຸງກົງຈັກການຈັດຕັ້ງ ປະຈຳປີ 2023 ແລະທິດທາງແຜນການປີ 2024 ຂອງສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮັກສາການເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ໂດຍມີການເຂົ້າຮ່ວມຂອງບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກຂຶ້ນໄປ ແລະ ວິຊາການທີ່ເຮັດວຽກງານຈັດຕັ້ງພັກ-ພະນັກງານ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ເນື້ອໃນທີ່ສຳຄັນຂອງກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານແລະວຽກງານປັບປຸງກົງຈັກການຈັດຕັ້ງທົ່ວປະເທດ ປະຈຳປີ 2023 ແລະ ທິດທາງແຜນການປີ 2024; ບົດສະຫຼຸບຕີລາຄາວຽກງານກໍ່ສ້າງພັກ-ພະນັກງານ ແລະ ວຽກງານປັບປຸງກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ ປະຈຳປີ 2023 ແລະ ທິດທາງແຜນການປີ 2024; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ກ່ຽວກັບການປະຕິບັດມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການເລືອກເຟັ້ນ ແຕ່ງຕັ້ງ, ສັບປ່ຽນໜ້າທີ່ຂອງພະນັກງານນຳພາ-ຄຸ້ມຄອງ ສະບັບເລກທີ 13/ຄຈສພ, ລົງວັນທີ 11 ມັງກອນ 2024; ຄຳແນະນຳຂອງຄະນະຈັດຕັ້ງສູກກາງພັກ ກ່ຽວກັບການປະຕິບັດມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການຕີລາຄາພະນັກງານ ສະບັບເລກທີ 14/ຄຈສພ, ລົງວັນທີ 11 ມັງກອນ 2024.

ໃນກອງປະຊຸມ ຍັງໄດ້ປະກາດການສັບປ່ຽນໜ້າທີ່ເລຂາທິການສະພາແຫ່ງຊາດ, ປະທານກຳມາທິການ; ແຕ່ງຕັ້ງຮອງປະທານກຳມາທິການແຜນການ, ການເງິນແລະການກວດສອບ,

ອ່ານຕໍ່ໜ້າ 12

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບ ຮອງລັດຖະມົນຕີກະຊວງການຕ່າງປະເທດ ເບລາຣຸດຊີ



(ສພຊ) ຕອນເຊົ້າຂອງວັນທີ 13 ມີນາ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊ ຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ເຢັບເກນີ ເຊດສະຕາກົບ (Evgeny SHESTAKOV) ຮອງລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ເບລາຣຸດຊີ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງທ່ານຮອງລັດຖະມົນຕີ ແລະ ຄະນະ ໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນອັນສຳຄັນໃນການຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງ ສປປລາວ ແລະ ສ.ເບລາຣຸດຊີ ກໍຄືລະຫວ່າງສອງກະຊວງການຕ່າງປະເທດລາວ-ເບລາຣຸດຊີ ໃຫ້ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ. ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ຕີລາຄາສະພາບການພົວພັນລະຫວ່າງສະພາແຫ່ງຊາດລາວແລະລັດຖະສະພາເບລາຣຸດຊີ ທີ່ໄດ້ມີມູນເຊື້ອແຫ່ງການພົວພັນອັນດີນຳກັນ, ໂດຍໄດ້ເຊັນຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດເບລາຣຸດຊີ ໃນປີ 2014, ໄດ້ມີການແລກປ່ຽນຄະນະຜູ້ແທນຂັ້ນສູງໃນເດືອນສິງຫາ 2022 ແລະ ຂັ້ນຕ່າງໆນຳກັນ, ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.ພິເສດ,ທ່ານປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວພົບປະທາງໄກກັບທ່ານ ວະລາດິເມຍ ອັງເດຣເຊນໂກ (Vladimir Andreichenko) ປະທານສະພາຜູ້ແທນປະຊາຊົນເບລາຣຸດຊີ ເຊິ່ງສອງຝ່າຍໄດ້ເປັນເອກະພາບທີ່ຈະສືບຕໍ່ເສີມຂະຫຍາຍສາຍພົວພັນລະຫວ່າງ 2 ອົງການນິຕິບັນຍັດໃຫ້ນັບມື້ນັບມີປະສິດທິຜົນ.

ທ່ານປອ. ນາງສູນທອນ ໄຊຍະຈັກ ຍັງສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຢ່າງຈົບງາມໃນການເລືອກຕັ້ງສະມາຊິກສະພາຜູ້ແທນປະຊາຊົນ ແຫ່ງ ສ.ເບລາຣຸດຊີ ເມື່ອວັນທີ 25 ກຸມພາ ຜ່ານມາ, ແຈ້ງໃຫ້ຊາບວ່າ ໃນປີ 2024 ສປປລາວ ເປັນປະທານອາຊຽນ ແລະ ສະພາແຫ່ງຊາດ ກໍຈະເປັນປະທານອົງການສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45.

ທ່ານ ເຢັບເກນີ ເຊດສະຕາກົບ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ໃຫ້ຄຳໝັ້ນວ່າຈະສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບແລະການຮ່ວມມືອັນດີງາມ ລະຫວ່າງສອງປະເທດ ພ້ອມທັງແຈ້ງໃຫ້ຊາບກ່ຽວກັບຈຸດປະສົງຂອງການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນຄັ້ງນີ້ ແມ່ນເພື່ອເຂົ້າຮ່ວມກອງປະຊຸມປຶກສາຫາລືດ້ານການເມືອງລາວ-ເບລາຣຸດຊີ ຄັ້ງທີ 3 ແລະ ຮ່ວມເປັນເຈົ້າພາບຈັດພິທີສະເຫຼີມສະຫຼອງຄົບຮອບ 30 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ລາວ-ເບລາຣຸດຊີ.

**(ນາງ ກຸກກົກ ບຸດດາໄຊ)**

## ຍົກລະດັບຄວາມຮູ້ວຽກງານສ້າງ ແລະ ປັບປຸງກົດໝາຍ



(ສພຊ) ເພື່ອຮັບປະກັນການປະຕິບັດວຽກງານສ້າງແລະປັບປຸງກົດໝາຍ ເປັນລະບົບ ແລະ ສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ແລະ ເພື່ອປັບປຸງກົນໄກ, ຂັ້ນຕອນການປະຕິບັດວຽກງານໃນການເປັນເສນາທິການສ້າງ ແລະ ປັບປຸງກົດໝາຍ

ອ່ານຕໍ່ໜ້າ 3

## ເຝິກອົບຮົມກ່ຽວກັບກົນໄກການກວດກາ ແລະ ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ



(ສພຊ) ກອງປະຊຸມເຝິກອົບຮົມກ່ຽວກັບກົນໄກການກວດກາ ແລະ ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ຂອງກຳມາທິການຍຸຕິທຳ (ກມຍທ) ໄດ້ຈັດຂຶ້ນລະຫວ່າງວັນທີ 14-15 ມີນາ 2024 ທີ່ສະພາແຫ່ງຊາດ (ສພຊ), ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ; ເຂົ້າຮ່ວມມີບັນດາຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ກມຍທ ແລະ ພະນັກງານພາຍໃນ ສພຊ. ທັງນີ້ ກໍເພື່ອຍົກລະດັບຄວາມຮູ້ໃຫ້ແກ່ພະນັກງານ-ລັດຖະກອນໃນການເປັນເສນາທິການໃຫ້ແກ່ກຳມາທິການຍຸຕິທຳ, ຄະນະປະຈຳສະພາແຫ່ງຊາດໃຫ້ມີຄວາມເປັນເອກະພາບກັນ ແລະ ເຝິກອົບຮົມການຂຶດ

ອ່ານຕໍ່ໜ້າ 3



6 ວິທີ... (ໜ້າ 10)


Article unique

Après le dix-septième alinéa de l'article 34 de la Constitution, il est inséré un alinéa ainsi rédigé :

« La loi détermine les conditions dans lesquelles s'exerce la liberté garantie à la femme d'avoir recours à une interruption volontaire de grossesse. »

Délibéré en séance publique, à Versailles, le 4 mars 2024.

La Présidente,

ຝຣັ່ງ ເປັນປະເທດ... (ໜ້າ 11)




ບັນຫາຢາເສບຕິດ... (ໜ້າ 12)

**ຂໍ່ານັບຊົມເຊີຍວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 69 ປີ (22 ມີນາ 1955 - 22 ມີນາ 2024) ຢ່າງສຸດໃຈ!**

# ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກມຍທ

(ສພຊ) ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການຍຸຕິທຳ (ກມຍທ) ໄດ້ຈັດຂຶ້ນໃນຕອນບ່າຍຂອງວັນທີ 11 ມີນາ 2024 ທີ່ສະພາແຫ່ງຊາດ (ຕຶກຫຼັງໃໝ່) ໂດຍການເປັນປະທານຮ່ວມຂອງສະຫາຍ ຄຳແພງ ວິລະພັນ ເລຂາໜ່ວຍພັກຮາກຖານ ກມຍທ, ສະຫາຍ ພອນແກ້ວ ຕົ້ນອໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ (ສພຊ) ແລະ ສະຫາຍ ເສລີສັນ ວົງແສງຈັນ ເລຂາໜ່ວຍຊາວໜຸ່ມຮາກຖານ ກມຍທ; ມີບັນດາສະຫາຍເລຂາໜ່ວຍຊາວໜຸ່ມຮາກຖານພາຍໃນ ສພຊ ແລະ ສະມາຊິກຊາວໜຸ່ມຮາກຖານກມຍທເຂົ້າຮ່ວມ.



ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເມືອງ ແລະບົດສຳຫຼວດການນຳພາຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການຍຸຕິທຳ; ຈາກນັ້ນ, ໄດ້ເປັນເອກະພາບ ພິຈາລະນາ, ຮັບຮອງເອົາບັນດາເນື້ອໃນສຳຄັນຄື: ຕີລາຄາສະພາບການເຄື່ອນໄຫວໄລຍະຜ່ານມາ ແຕ່ປີ 2020-2024 ໃນນັ້ນ, ໄດ້ຍົກໃຫ້ເຫັນດ້ານດີຜົນງານຕ່າງໆທີ່ໜ່ວຍຊາວໜຸ່ມຮາກຖານ ກມຍທ ຍາດມາໄດ້ ພ້ອມທັງຍົກໃຫ້ເຫັນດ້ານອ່ອນຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຕ້ອງໄດ້ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມຮາກຖານໃຫ້ດີຂຶ້ນກວ່າເກົ່າ; ກຳນົດທິດທາງການເຄື່ອນໄຫວວຽກງານຂອງຄະນະໜ່ວຍຊາວໜຸ່ມຮາກຖານກມຍທ ໄລຍະ 5 ປີ (2024-2028) ໃນນັ້ນ, ຕົ້ນຕໍແມ່ນເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ, ການພັດທະນາວຽກງານຊາວໜຸ່ມ ຕິດພັນກັບການເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານ ກມຍທ ໄປພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະແຜນການທີ່ວາງໄວ້ໃຫ້ມີປະສິດທິພາບ ແລະປະສິດທິຜົນສູງຂຶ້ນກວ່າເກົ່າ; ບົດສຳຫຼວດການນຳພາຂອງຄະນະໜ່ວຍຊາວໜຸ່ມຮາກຖານ ກ່ຽວກັບການຊີ້ນຳ-ນຳພາຕໍ່ວຽກງານຊາວໜຸ່ມຕະຫຼອດໄລຍະ 5 ປີຜ່ານມາ ເຊິ່ງຍົກໃຫ້ເຫັນດ້ານດີຜົນງານ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ຈະຕ້ອງນຳໄປເປັນບົດຮຽນໃນການສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຊາວໜຸ່ມ ກໍຄືການຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກມຍທ ບັນລຸຕາມຄາດໝາຍທີ່ວາງໄວ້.

ກອງປະຊຸມໄດ້ເສີມຂະຫຍາຍປະຊາທິປະໄຕ ເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການຍຸຕິທຳຊຸດໃໝ່ ເຊິ່ງປະກອບມີ 5 ສະຫາຍ ຍິງ 2 ສະຫາຍ ໃນນັ້ນ, ກອງປະຊຸມເຫັນດີເລືອກເອົາສະຫາຍເສລີສັນ ວົງແສງຈັນ ເປັນເລຂາ, ສະຫາຍ ນາງ ດາວັນ ແກ້ວພົມມີເປັນຮອງເລຂາທັງເປັນປະທານກວດກາ, ສະຫາຍ ບຸນຄື ພັນທະວົງສີເປັນຮອງເລຂາແລະເລືອກເອົາສະຫາຍແສງຈັນເພັງພົມມາ ແລະ ສະຫາຍ ນາງ ພຸດທະສິນ ໄກຊຶງ ເປັນກຳມະການໜ່ວຍ.

ໃນໂອກາດນີ້, ສະຫາຍ ຄຳແພງ ວິລະພັນ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານອັນດີເດັ່ນຫຼາຍດ້ານທີ່ໜ່ວຍຊາວໜຸ່ມຮາກຖານກຳມາທິການຍຸຕິທຳຍາດມາໄດ້ ແລະ ສະເໜີໃຫ້ເອົາໃຈໃສ່ສືບຕໍ່ບາງດ້ານ ເປັນຕົ້ນແມ່ນ: ເອົາໃຈໃສ່ດຳເນີນຊີວິດການເມືອງເປັນປະຈຳທຸກເດືອນ ໂດຍຖືເອົາການຕຳນິຕິຊົມຕົນເອງ, ການຕິຊົມເຊິ່ງກັນແລະກັນເປັນປັດໄຈສຳຄັນ, ປະຕິບັດຫຼັກການລວມສູນປະຊາທິປະໄຕ; ຖ່າຍທອດປະສົບການທີ່ມີໃຫ້ແກ່ສະມາຊິກ ເພື່ອເຮັດໃຫ້ສະມາຊິກຊາວໜຸ່ມໄດ້ມີໂອກາດພັດທະນາຕົນເອງແລະມີທ່າຂະຫຍາຍຕົວຂຶ້ນເທື່ອລະກ້າວ; ປຸກລະດົມສະມາຊິກຊາວໜຸ່ມພາຍໃນໜ່ວຍໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ, ແບບແຜນການນຳພາ, ແບບແຜນວິທີເຮັດວຽກຢ່າງມີວິທະຍາສາດ ແລະ ມີຫົວຄິດປະດິດສ້າງ ບົນພື້ນຖານລະບຽບ ແລະ ກົດໝາຍກຳນົດໄວ້; ເຕົ້າໂຮມຄວາມສາມັກຄີ, ປຸກລະດົມສະມາຊິກຊາວໜຸ່ມ ໃຫ້ມີແບບແຜນການດຳລົງຊີວິດທີ່ດີ, ດຸໝັ່ນໃນການສຶກສາຮ່ຳຮຽນ, ຍົກລະດັບຄວາມຮູ້ຄວາມສາມາດຂອງຕົນໃຫ້ສູງຂຶ້ນໄປເລື້ອຍໆ ເພື່ອໃຫ້ກາຍເປັນຜູ້ຊຳນານງານ ແລະສຳລັບທິດທາງຈຸດສຸມວຽກງານໃນຕໍ່ໜ້າສະເໜີໃຫ້ເອົາໃຈໃສ່ປັບປຸງແບບແຜນການນຳພາ ແລະ ການຈັດຕັ້ງຂອງຕົນໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ນຳພາເປັນໝູ່ຄະນະ, ມີການແບ່ງງານແບ່ງຄວາມຮັບຜິດຊອບໃຫ້ສະມາຊິກພາຍໃນໜ່ວຍຢ່າງຈະແຈ້ງ; ນຳພາ-ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ສະມາຊິກຊາວໜຸ່ມໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ທາງດ້ານປະລິມານ ແລະ ຄຸນນະພາບ; ການປະສານງານກັບຄະນະໜ່ວຍພັກຮາກຖານກຳມາທິການຍຸຕິທຳ ແລະ ຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ໃຫ້ເປັນລະບົບ ແລະ ຕໍ່ເນື່ອງ; ເພີ່ມທະວີສຶກສາອົບຮົມສະມາຊິກຊາວໜຸ່ມ ໃຫ້ມີຄຸນທາດການເມືອງ.

**(ສອນສັກ ວັນວິໄຊ)**






***# ຄັດໂດຍ: ທອມສະນິດ***

*❒ ໃນທົ່ວປະເທດ ມີເຮືອນຮົ່ມສຳລັບປູກພືດຜັກທັງໝົດປະມານ 4.435 ຫຼັງ, ມີສະຫະກອນຜະລິດພືດຜັກທັງໝົດ ປະມານ 6 ສະຫະກອນ ແລະ ມີກຸ່ມຜູ້ຜະລິດພືດຜັກທົ່ວປະເທດ ປະມານ 1.880 ກຸ່ມ ສາມາດຜະລິດພືດຜັກຕາມແຕ່ລະຮອບວຽນ ເປັນຕົ້ນແມ່ນ: ຜັກກິນໃບ, ຜັກກິນຫົວ ແລະ ພືດຜັກໃຫ້ໝາກ ສະເລ່ຍປະມານ 700.000 ກວ່າໂຕນ ແລະ ອີກສ່ວນໜຶ່ງແມ່ນຊາວກະສິກອນທີ່ຜະລິດໃນລະດັບຄອບຄົວຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ເຊິ່ງລວມແລ້ວໃນ ແຕ່ລະປີທົ່ວປະເທດຜະລິດໄດ້ ປະມານ 1 ລ້ານກວ່າໂຕນ.*

***ນສພ. ປະຊາຊົນ 05/03/2024***

*❒ ໃນປີ 2023 ສປປ ລາວ ມີມູນຄ່າການສົ່ງອອກ ແລະ ນຳເຂົ້າສິນຄ້າທັງໝົດ ປະມານ 15.558 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 3,5% ທຽບໃສ່ປີ 2022. ໃນນັ້ນ, ມູນຄ່າການສົ່ງອອກສິນຄ້າປະມານ 8.370 ລ້ານໂດລາ ເພີ່ມຂຶ້ນ 3,5% ທຽບໃສ່ປີ 2022, ສ່ວນມູນຄ່າການນຳເຂົ້າສິນຄ້າປະມານ 7.189 ລ້ານໂດລາ ເພີ່ມຂຶ້ນ 5% ທຽບໃສ່ປີ 2022. ສຳລັບສິນຄ້າສົ່ງອອກຫຼັກ ປະກອບມີ: ໄຟຟ້າ 2.382 ລ້ານໂດລາສະຫະລັດ, ຄຳປະສົມ-ຄຳແທ່ງ 703 ລ້ານໂດລາ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ 467 ລ້ານໂດລາ, ແຮ່ທອງ 425 ລ້ານໂດລາ, ແຮ່ເຫຼັກ 411 ລ້ານໂດລາ, ເກືອກາລີ 401 ລ້ານ ແລະ ອື່ນໆ ສິນຄ້າສ່ວນໃຫຍ່ແມ່ນສົ່ງອອກໄປປະເທດໄທ, ຈີນ, ຫວຽດນາມ, ອົດສະຕຣາລີ ແລະ ກຳປູເຈຍ; ສ່ວນສິນຄ້ານຳເຂົ້າ ປະກອບມີ: ນ້ຳມັນກາຊວນ 952 ລ້ານໂດລາ, ອຸປະກອນກົນຈັກ (ນອກຈາກເຄື່ອງກົນຈັກພາຫະນະ) 606 ລ້ານໂດລາສະຫະລັດ, ພາຫະນະທາງບົກ (ນອກຈາກລົດຈັກ, ລົດໄຖ) 580 ລ້ານໂດລາ, ເຫຼັກ ແລະ ເຄື່ອງທີ່ເຮັດດ້ວຍເຫຼັກ, ເຫຼັກກ້າ 451 ລ້ານໂດລາ, ນ້ຳມັນແອັດຊັງ ແລະ ແອັດຊັງພິເສດ 428 ລ້ານໂດລາ ແລະອື່ນໆ ການນຳເຂົ້າສ່ວນໃຫຍ່ຈາກປະເທດໄທ, ຈີນ, ຫວຽດນາມ, ສະຫະລັດອາເມຣິກາ ແລະ ຍີ່ປຸ່ນ.*

***ນສພ. ປະເທດລາວ 06/03/2024***

*❒ ໃນ 1 ປີຜ່ານມາ, ລາວໂທລະຄົມມະນາຄົມມະຫາຊົນ (ລລທ) ໄດ້ລົງທຶນຂະຫຍາຍຕາໜ່າງລະບົບໂທລະຄົມມະນາຄົມ ມູນຄ່າ 14,79 ລ້ານໂດລາສະຫະລັດ; ປັດຈຸບັນ, ມີສະຖານີມືຖື 2G, 3G, 4G ແລະ 4,5G ຄວບຄຸມພື້ນທີ່ປະຊາກອນທົ່ວປະເທດ; ນອກນີ້, ຍັງມີ 5G ໃຫ້ບໍລິການຢູ່ບັນດາຕົວເມືອງໃຫຍ່ ແລະ ມີ FTTH ໃຫ້ບໍລິການທົ່ວປະເທດ, ສາມາດຂະຫຍາຍຖານລູກຄ້າໃໝ່ແລະຮັກສາຈຳນວນລູກຄ້າເກົ່າໄວ້ໄດ້ຢ່າງໝັ້ນຄົງປັດຈຸບັນ, ມີລູກຄ້າໃຊ້ບໍລິການຕົວຈິງ MBB ແລະ FBB 2 ຈຳນວນ 3,7 ລ້ານກວ່າເລກໝາຍ; ປີ 2023 ກຸ່ມບໍລິສັດສ້າງລາຍຮັບ 1.938,97 ຕື້ກີບ (ບໍ່ລວມອາກອນ) ປະຕິບັດພັນທະໃຫ້ລັດຖະບານ 232,24 ຕື້ກີບ; ສຳລັບແຜນການປີ 2024 ຈະສູ້ຊົນຮັກສາຖານລູກຄ້າເກົ່າ ແລະ ສ້າງຖານລູກຄ້າໃໝ່ ສ້າງລາຍຮັບໃຫ້ໄດ 2.532,32 ຕື້ກີບ ທຽບໃສ່ປີ 2023 ເພີ່ມຂຶ້ນ 30,6% ຄາດຄະເນກຳໄລສຸດທິໃຫ້ໄດ້ 598,67 ຕື້ກີບ ແລະ ປະຕິບັດພັນທະໃຫ້ລັດຖະບານ 259,23 ຕື້ກີບ ນອກນີ້,ຍັງຈະລົງທຶນ 15,6 ລ້ານໂດລາສະຫະລັດ ເພື່ອປັບປຸງ ແລະ ຂະຫຍາຍເຄືອຄ່າຍການໃຫ້ບໍລິການດ້ານໂທລະຄົມ ໂດຍສະເພາະ Mobile Broadband and Fixed Broadband ໃຫ້ຮັບປະກັນແກ່ການບໍລິການລູກຄ້າດ້ານປະລິມານ ແລະຄຸນນະພາບ ຂໍ້ມູນມີຄວາມຄວາມປອດໄພ ແລະ ເປັນລະບົບທັນສະໄໝ ເພື່ອຮັບປະກັນໃຫ້ການບໍລິການສັງຄົມເພື່ອໃຫ້ບັນລຸຕາມແຜນຍຸດທະສາດ ແລະ ວິໄສທັດກ້າວໄປສູ່ຍຸກ Lao Digital Life.*

***ນສພ. ວຽງຈັນໃໝ່ 11/03/2024***

*❒ ນັບແຕ່ວັນທີ 10 ມີນາ 2024 ເປັນຕົ້ນໄປ, ບໍລິສັດທາງລົດ ໄຟ ລາວ-ຈີນ ຈຳກັດ ໄດ້ເພີ່ມຈຸດຈອດສະຖານີ 2 ຈຸດ ສຳລັບລົດໄຟສາກົນຖ້ຽວ C88/7 ຄື: ສະຖານີເມືອງໄຊ (ເບື້ອງລາວ) ແລະ ສະຖານີຢູ່ຊີ (ເບື້ອງຈີນ). ສຳລັບເບື້ອງລາວ ປັດຈຸບັນປະກອບມີ 5 ສະຖານີ ຄື: ສະຖານີນະຄອນຫຼວງວຽງຈັນ, ສະຖານີວັງວຽງ, ສະຖານີຫຼວງພະບາງ, ສະຖານີບໍ່ເຕ່ນ ແລະ ສະຖານີເມືອງໄຊ (ເພີ່ມໃໝ່) ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ໂດຍສານທັງພາຍໃນ ແລະ ຜູ້ໂດຍສານສາກົນທີ່ຈະເດີນທາງໄປຍັງ 2 ສະຖານີດັ່ງກ່າວ; ນອກນີ້, ຍັງໄດ້ເພີ່ມຈຸດຈອດສະຖານີໂພນໂຮງສຳລັບຂະບວນລົດໄຟຖ້ຽວ C84 ແລະ ປັບເວລາເດີນທາງຂອງຖ້ຽວ C85, C92, C84, K12 ແລະ K11 ໃນບາງສະຖານີຕື່ມອີກ ເພື່ອອຳນວຍຄວາມສະດວກໃນການເດີນທາງຂອງປະຊາຊົນໃຫ້ດີຍິ່ງຂຶ້ນ.*

***ນສພ. ປະເທດລາວ 12/03/2024***

# ກອງປະຊຸມໃຫຍ່ຄັ້ງທີ II ຂອງ ໜ່ວຍຊາວໜຸ່ມຮາກຖານ ສນສ




(ສພຊ)ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 12 ມີນາ 2024 ທີ່ສະພາແຫ່ງຊາດ (ຕຶກຫຼັງໃໝ່) ໂດຍການເປັນປະທານຮ່ວມຂອງສະຫາຍ ນາງ ແສງທະວີ ໄຊຍະວົດ ຄະນະພັກຮາກຖານສະຖາບັນຄົ້ນຄວ້ານິຕິກຳ, ສະຫາຍ ໄກມະນີເທບ ບົວລີ ຮອງຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ (ສພຊ) ແລະສະຫາຍ ສິດຖະໜອມ ພົມມະຈັນ ເລຂາໜ່ວຍຊາວໜຸ່ມຮາກຖານ ສນສ; ມີບັນດາສະຫາຍເລຂາໜ່ວຍຊາວໜຸ່ມຮາກຖານພາຍໃນ ສພຊ ແລະ ສະມາຊິກຊາວໜຸ່ມຮາກຖານ ສນສ ລວມຜູ້ເຂົ້າຮ່ວມທັງໝົດ 38 ສະຫາຍ ຍິງ 10 ສະຫາຍ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເມືອງ ແລະບົດສຳຫຼວດການນຳພາຂອງໜ່ວຍຊາວໜຸ່ມ ຮາກຖານສະຖາບັນຄົ້ນຄວ້ານິຕິກຳ; ຈາກນັ້ນ, ໄດ້ເປັນເອກະພາບ ພິຈາລະນາ, ຮັບຮອງເອົາບັນດາເນື້ອໃນສຳຄັນ ຄື: ຕີລາຄາສະພາບການເຄື່ອນໄຫວໄລຍະຜ່ານມາແຕ່ປີ2020-2024 ໃນນັ້ນ, ໄດ້ຍົກໃຫ້ເຫັນດ້ານດີຜົນງານຕ່າງໆທີ່ໜ່ວຍຊາວໜຸ່ມຮາກຖານ ສນສ ຍາດມາໄດ້ພ້ອມທັງຍົກໃຫ້ເຫັນດ້ານອ່ອນຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຕ້ອງໄດ້ປັບປຸງແກ້ໄຂເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມຮາກຖານໃຫ້ດີຂຶ້ນກວ່າເກົ່າ; ກຳນົດທິດທາງການເຄື່ອນໄຫວວຽກງານຂອງຄະນະໜ່ວຍຊາວໜຸ່ມຮາກຖານ ສນສ ໄລຍະ 5 ປີ(2024-2028) ໃນນັ້ນ, ຕົ້ນຕໍແມ່ນເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ, ການພັດທະນາວຽກງານຊາວໜຸ່ມ ຕິດພັນກັບການເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານ ສນສ ໄປພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະ ແຜນການທີ່ວາງໄວ້ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ; ບົດສຳຫຼວດການນຳພາຂອງຄະນະ ໜ່ວຍຊາວໜຸ່ມຮາກຖານກ່ຽວກັບການຊີ້ນຳ-ນຳພາຕໍ່ວຽກງານຊາວໜຸ່ມຕະຫຼອດໄລຍະ 5 ປີຜ່ານມາ ເຊິ່ງຍົກໃຫ້ເຫັນດ້ານດີຜົນງານ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ຈະຕ້ອງນຳໄປເປັນບົດຮຽນໃນການສືບຕໍ່ປັບປຸງແກ້ໄຂເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຊາວໜຸ່ມ ກໍຄືການຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ສນສ ບັນລຸຕາມຄາດໝາຍທີ່ວາງໄວ້.

ກອງປະຊຸມໄດ້ເສີມຂະຫຍາຍປະຊາທິປະໄຕ ເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານສະຖາບັນຄົ້ນຄວ້ານິຕິກຳຊຸດໃໝ່ ເຊິ່ງປະກອບມີ 5 ສະຫາຍ ຍິງ 2 ສະຫາຍ, ໃນນັ້ນ, ກອງປະຊຸມເຫັນດີເລືອກເອົາສະຫາຍ ນາງ ພອນວິມົນ ຄຳຈັນສີ ເປັນເລຂາ, ສະຫາຍ ອານີ ຄ້າທະວີ ເປັນຮອງເລຂາ ທັງເປັນປະທານກວດກາ, ສະຫາຍ ໂອດ່ຽນ ພົມມະສານ ເປັນຮອງເລຂາຜູ້ທີ 2, ສະຫາຍ ໄມອ່ອນ ເລືອງໄຊສີ ແລະ ສະຫາຍ ກາວິພອນ ແກ້ວດອນໃຜ່ ເປັນຄະນະ.

ໃນໂອກາດນີ້, ສະຫາຍ ນາງ ແສງທະວີ ໄຊຍະວົດ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງຄະນະໜ່ວຍຊາວໜຸ່ມຊຸດຜ່ານມາແລະສະມາຊິກຊາວໜຸ່ມທັງໝົດ ທີ່ຍາດໄດ້ຜົນງານໃນຫຼາຍໆດ້ານ, ຄຽງຄູ່ກັນນີ້ ກໍສະແດງຄວາມເປັນຫ່ວງເປັນໄຍຕໍ່ດ້ານອ່ອນ-ຂໍ້ຄົງຄ້າງ ເຊິ່ງຮຽກຮ້ອງໃຫ້ຄະນະໜ່ວຍຊາວໜຸ່ມຊຸດໃໝ່ ຈະຕ້ອງສຸມໃສ່ປັບປຸງແກ້ໄຂໃຫ້ມີທິດທາງທີ່ຕັ້ງໜ້າກວ່າເກົ່າ; ພ້ອມກັນນັ້ນ ຍັງເຊື່ອໝັ້ນວ່າ ຄະນະໜ່ວຍຊາວໜຸ່ມຊຸດໃໝ່ ຈະສືບຕໍ່ຊີ້ນຳ-ນຳພາສະມາຊິກພາຍໃນໜ່ວຍ ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນຕາມມະຕິກອງປະຊຸມໃນຄັ້ງນີ້ ຍາດໄດ້ຜົນງານ ແລະ ຜົນສຳເລັດໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**



## ຍົກລະດັບ...

(ຕໍ່ຈາກໜ້າ 1)

ໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ. ໃນວັນທີ 12 ມີນາ2024ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ, ໄດ້ມີກອງປະຊຸມສຳມະນາຍົກລະດັບຄວາມຮູ້ກ່ຽວກັບວຽກງານສ້າງແລະປັບປຸງກົດໝາຍ ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງພາຍໃຕ້ການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ ໂດຍມີວິທະຍາກອນຈາກກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ຫ້ອງວ່າການສຳນັກງານປະທານປະເທດ; ເຂົ້າຮ່ວມມີທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ, ບັນດາທ່ານປະທານ-ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບຈາກສະພາປະຊາຊົນນະຄອນຫຼວງວຽງຈັນ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງຫຼວງພະບາງ, ແຂວງວຽງຈັນ ແລະແຂວງບໍລິຄຳໄຊ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນຈາກສະພາແຫ່ງຊາດ ເຊິ່ງໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວເປີດວ່າ: ກອງປະຊຸມຄັ້ງນີ້ມີຄວາມໝາຍສຳຄັນຫຼາຍ ເນື່ອງຈາກວ່າພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນວຽກງານສ້າງນິຕິກຳລະດັບຕ່າງໆຂອງລັດເຮົາ, ວຽກງານສ້າງ ແລະ ປັບປຸງກົດໝາຍ ເປັນໜຶ່ງໃນພາລະບົດບາດສຳຄັນຕົ້ນຕໍຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ. ໃນໄລຍະທີ່ຜ່ານມາ ພວກເຮົາໄດ້ຮ່ວມກັນຈັດຕັ້ງປະຕິບັດພາລະບົດບາດດັ່ງກ່າວນີ້ຕາມຂອບເຂດຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນໄດ້ດີສົມຄວນ ເຊິ່ງມາຮອດປັດຈຸບັນສະພາແຫ່ງຊາດໄດ້ຮັບຮອງເອົາຮ່າງກົດໝາຍສ້າງໃໝ່ ແລະ ປັບປຸງ 167 ສະບັບ; ແຕ່ຄຽງຄູ່ກັນນັ້ນ ກໍຍັງມີດ້ານອ່ອນທີ່ເລັ່ງທວງໃຫ້ພວກເຮົາຕ້ອງແກ້ໄຂ ເປັນຕົ້ນຕ້ອງບຳລຸງຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ຖັນແຖວພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານດັ່ງກ່າວ ໃຫ້ສາມາດຈັດຕັ້ງປະຕິບັດພາລະບົດບາດທີ່ເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກໍຄືທຸກພາກສ່ວນທີ່ເຮັດວຽກງານສ້າງ ແລະ ປັບປຸງກົດໝາຍ ໃຫ້ມີປະ ສິດທິພາບ, ປະສິດທິຜົນສູງຂຶ້ນກວ່າເກົ່າ. ກອງປະຊຸມຂອງພວກເຮົາຈະໄດ້ດຳເນີນເປັນເວລາ 2 ວັນ ເຫັນວ່າເນື້ອໃນກອງປະຊຸມແມ່ນກວ້າງຂວາງ ແລະ ເລິກເຊິ່ງ ແຕ່ເວລາພັດມີໜ້ອຍ; ດັ່ງນັ້ນ, ສະເໜີໃຫ້ບັນດາທ່ານຈົ່ງຕັ້ງໜ້າຄົ້ນຄວ້າ,ປະກອບຄວາມເຫັນ ເຮັດໃຫ້ກອງປະຊຸມຄັ້ງນີ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ໃນໄລຍະດຳເນີນກອງປະຊຸມ, ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໃນການເປັນເສນາທິການໃນວຽກງານສ້າງ ແລະ ປັບປຸງກົດໝາຍໃຫ້ແກ່ລັດຖະບານ; ພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການກົດໝາຍໃນວຽກງານສ້າງແລະປັບປຸງກົດໝາຍໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ; ພາລະບົດບາດ, ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ ໃນການກວດກາຄວາມສອດຄ່ອງທາງດ້ານກົດໝາຍ; ພາລະບົດບາດ, ສິດແລະໜ້າທີ່ຂອງຫ້ອງວ່າການສຳນັກງານປະທານປະເທດ ໃນການເປັນເສນາທິການໃນວຽກງານສ້າງ ແລະ ປັບປຸງກົດໝາຍໃຫ້ແກ່ປະທານປະເທດ; ບົດຮຽນຂອງຕ່າງປະເທດ ກ່ຽວກັບຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ ຈາກຫົວໜ້າຊ່ຽວຊານປະຈຳໂຄງການສະເຕັບສ໌ UNDP ແລະ ເຜີຍແຜ່ຄຳແນະນຳການສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະ2026-2030. ຈາກນັ້ນ, ໄດ້ສົນທະນາແລກປ່ຽນບົດຮຽນເຊິ່ງກັນ ແລະກັນໃນແຕ່ລະຫົວຂໍ້ທີ່ທາງກອງປະຊຸມໄດ້ຍົກຂຶ້ນມາ.

ພາຍຫຼັງດຳເນີນມາເປັນເວລາ 2 ວັນ, ກອງປະຊຸມໄດ້ສຳເລັດລົງໃນຕອນບ່າຍຂອງວັນທີ 13 ມີນາ ພາຍໃຕ້ການເປັນປະທານຂອງທ່ານ ປອ. ພູທອນ ວໍລະເພັດ ເຊິ່ງທ່ານໄດ້ມີຄຳເຫັນວ່າ: ຕະຫຼອດໄລຍະເວລາຂອງການດຳເນີນກອງປະຊຸມ,ບັນດາທ່ານທີ່ເຂົ້າຮ່ວມ ໄດ້ເປັນເຈົ້າການໃນການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕໍ່ບັນດາເນື້ອໃນຂອງເອກະສານຢ່າງຟົດຟື້ນ ແລະ ກົງໄປກົງມາ ດ້ວຍຄວາມຮັບຜິດຊອບສູງ, ມີລັກສະນະຫຼັກການ, ຕິດພັນກັບບົດຮຽນຕົວຈິງ ເຊິ່ງບັນດາຄຳເຫັນທີ່ໄດ້ປະກອບຕໍ່ກອງປະຊຸມຄັ້ງນີ້ລ້ວນແຕ່ມີຄຸນປະໂຫຍດຫຼາຍຕໍ່ວຽກງານສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ສະນັ້ນ, ສະເໜີໃຫ້ຄະນະຮັບຜິດຊອບຈົ່ງໄດ້ນຳໄປຄົ້ນຄວ້າ, ຄິດຫງຳຕາມຄຳຄິດຄຳເຫັນຂອງກອງປະຊຸມ ເພື່ອເຮັດໃຫ້ວຽກງານສ້າງ ແລະ ປັບປຸງກົດໝາຍ ສາມາດຈັດຕັ້ງປະ ຕິບັດໄດ້ຢ່າງມີຄຸນນະພາບ, ມີປະສິດທິພາບ, ສອດຄ່ອງກັບສະພາບຄວາມເປັນຈິງໃນປັດຈຸບັນ ແນໃສ່ເຮັດໃຫ້ການປະຕິບັດພາລະບົດບາດໃນນາມເປັນເສນາທິການໃຫ້ແກ່ຄະນະນຳຂອງພາກສ່ວນຕ່າງໆ ມີປະສິດປະທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມກົດໝາຍທີ່ກຳນົດໄວ້.

**(ນາງ ສຸພາວັນ ທອມສະນິດ)**

## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ຂຽນເອກະສານຮັບໃຊ້ວຽກງານຂອງ ກມຍທ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ໃນການຕິດຕາມກວດກາ ແລະ ແກ້ໄຂຄຳຮ້ອງຂໍ ຄວາມເປັນທຳ.

ກອງປະຊຸມໄດ້ຮັບຟັງບົດສະເໜີການຄົ້ນຄວ້າວິເຄາະ, ວິໄຈຄຳຮ້ອງຂໍຄວາມເປັນທຳຂອງກົມຄຳຮ້ອງຂໍຄວາມເປັນທຳ ແລະ ຮ່າງເອກະສານການຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ; ເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂ ຄຳຮ້ອງທຸກ ສະບັບປັບປຸງປີ 2022; ເຜີຍແຜ່ມະຕິວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ສະບັບເລກທີ 07/ຄປຈ, ລົງວັນທີ 09 ມັງກອນ 2023; ບົດສະເໜີກ່ຽວກັບການຮັບຄຳຮ້ອງຂໍຄວາມເປັນທຳ, ການຮັບຕ້ອນ ແລະ ໃຫ້ຄຳປຶກສາຂອງກົມຕິດຕາມກວດກາວຽກງານຍຸຕິທຳ. ຈາກນັ້ນ ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນ ປະກອບຄຳຄິດຄຳເຫັນຕໍ່ບັນດາເນື້ອໃນຂອງເອກະສານຢ່າງຟົດຟື້ນ ແລະ ກົງໄປກົງມາ ດ້ວຍຄວາມຮັບຜິດຊອບສູງ ແລະ ມີລັກສະນະຫຼັກການ ເພື່ອໃຫ້ເປັນເອກະພາບກັນພາຍໃນສະພາແຫ່ງຊາດ.

ທ່ານ ຄຳແພງ ວິລະພັນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜູ້ເຂົ້າຮ່ວມ ທີ່ພ້ອມກັນຄົ້ນຄວ້າປະກອບຄຳຄິດ ຄຳເຫັນຢ່າງສ້າງສັນ ແລະ ມີລັກສະນະວິຊາການ ເພື່ອນຳເອົາບົດຮຽນທີ່ໄດ້ຮັບຄັ້ງນີ້ ໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງ ແລະ ເປັນເອກະພາບກັນພາຍໃນ ເພື່ອໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະປະສິດທິຜົນດີຂຶ້ນກວ່າເກົ່າ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**

# ບັນຫາພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງສາລະວັນ

ທ່ານ ສີເຣັງ ຫອມສິມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 14 ແຂວງສາລະວັນໄດ້ໃຫ້ສຳພາດກ່ຽວກັບບັນຫາພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງ ໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ: ບັນຫາຂໍ້ຂັດແຍ່ງກຳມະສິດທີ່ດິນ ໃນວຽກງານຄຳຮ້ອງທຸກ ທີ່ປະຊາຊົນມາຮ້ອງທຸກກັບສະພາປະຊາຊົນແຂວງຂອງພວກເຮົາ ສ່ວນໃຫຍ່ກໍແມ່ນບັນຫາຂໍ້ຂັດແຍ່ງກຳມະສິດທີ່ດິນ ລະຫວ່າງບຸກຄົນ ກັບ ບຸກຄົນ, ລະຫວ່າງບຸກຄົນ ກັບ ຜູ້ສຳປະທານທີ່ດິນຂອງລັດເຊິ່ງບັນຫານີ້ຂ້າພະເຈົ້າເຄີຍຍົກຂຶ້ນມາແລ້ວໃນກອງປະຊຸມສະໄໝຜ່ານມາ, ເຊິ່ງວ່າໃນປັດຈຸບັນສະພາປະຊາຊົນແຂວງສາລະວັນເຮົາໄດ້ປະສານສົມທົບກັບອົງການປົກຄອງແຂວງຢ່າງໃກ້ຊິດ ໂດຍສະເພາະແມ່ນການຄົ້ນຄວ້າຮັບຮອງບັນດາໂຄງການເຊົ່າສຳປະທານທີ່ດິນພາຍໃນແຂວງ ແມ່ນໄດ້ປະສານສົມທົບກັນແຕ່ຫົວທີກ່ອນນຳສະເໜີສະພາປະຊາຊົນແຂວງຮັບຮອງ ແລະ ຕ້ອງໄດ້ມີຄວາມເອກະພາບກັນຕັ້ງແຕ່ຂັ້ນຕອນ ທີ່ຍັງບໍ່ທັນນຳສະເໜີເຈົ້າແຂວງ;

1. ບັນຫາການຊຸກຍູ້ຈັດເກັບລາຍຮັບງົບປະມານຂອງແຂວງ ເຊິ່ງຮອດປັດຈຸບັນ ເຖິງແມ່ນວ່າຈະມີຄວາມຄືບໜ້າໄປຫຼາຍ ສາມາດປະຕິບັດໄດ້ເຖິງ 144,80 ຕື້ກີບ ແຕ່ຖ້າທຽບໃສ່ແຜນການປີແລ້ວຍັງໄດ້ພຽງແຕ່ 82,42% ຂອງແຜນການປີເທົ່ານັ້ນ, ພູດສູນກາງປະຕິບັດໄດ້ 51,75 ຕື້ກີບ ເຊິ່ງຍັງໄດ້ແຕ່ 85,64% ຂອງແຜນການປີ ເຊິ່ງຍັງແມ່ນມີຄວາມໜ້າເປັນຫ່ວງ ເນື່ອງຈາກຈະໝົດປີແລ້ວ ແຕ່ການຈັດເກັບລາຍຮັບ ແມ່ນຍັງບໍ່ບັນລຸແຜນຄາດໝາຍທີ່ວາງໄວ້; ຜ່ານມາ ສະພາພວກເຮົາກໍໄດ້ຊຸກຍູ້ ໂດຍການຮັບຮອງມະຕິ ເປັນແຜນຄາດໝາຍລະອຽດຂອງສະພາໃນວຽກຂອງອົງການປົກຄອງແຂວງ ຈາກນັ້ນ ຍັງໄດ້ຜັນຂະຫຍາຍມະຕິໃຫຍ່ດັ່ງກ່າວແຍກອອກເປັນອັນສະເພາະຂອງແຕ່ລະເມືອງ ແລະ ບັນດາພະແນກການເປົ້າໝາຍຂອງອົງການປົກຄອງແຂວງອີກດ້ວຍ ເພື່ອຊຸກຍູ້ໃຫ້ແຕ່ລະແຜນ ຄາດໝາຍນັ້ນ ບັນລຸ ແລະ ເກີດຜົນເປັນຈິງ;

2. ບັນຫາເຂດເຊື່ອມຕໍ່ຊາຍແດນລະຫວ່າງບ້ານກັບບ້ານ, ເມືອງ ກັບ ເມືອງ ແລະ ແຂວງກັບແຂວງ ການແບ່ງເຂດແດນທີ່ຍັງບໍ່ຈະແຈ້ງ ຍັງເປັນພື້ນທີ່ທັບຊ້ອນ ມີຂໍ້ຄົງຄ້າງ ເຊັ່ນ: ຈຸດເຊື່ອມຕໍ່ລະຫວ່າງແຂວງສາລະວັນ ກັບ ແຂວງສະຫວັນນະເຂດ ມີຈຸດເຊື່ອມຕໍ່ທີ່ເປັນຂໍ້ຄົງຄ້າງຜ່ານມາມີ 7 ຈຸດ ແກ້ໄຂເອກະພາບກັນແລ້ວໄດ້ 5 ຈຸດ ຍັງອີກ 2 ຈຸດທີ່ຕ້ອງສືບຕໍ່ຮ່ວມກັນແກ້ໄຂ ຄື: ຈຸດເມືອງຕຸ້ມລານ ແຂວງສາລະວັນ ກັບ ເມືອງພີນ ແຂວງສະຫວັນນະເຂດ, ຈຸດເມືອງຕຸ້ມລານ ແຂວງສາລະວັນ ກັບ ເມືອງນອງ ແຂວງສະຫວັນນະເຂດ; ຕໍ່ມາແມ່ນຂໍ້ຄົງຄ້າງເຂດຊາຍແດນເຊື່ອມຕໍ່ລະຫວ່າງແຂວງສາລະວັນ ກັບ ແຂວງເຊກອງຜ່ານມາແມ່ນມີ 8 ຈຸດ ເຊິ່ງໄດ້ຮ່ວມກັນແກ້ໄຂສຳເລັດແລ້ວ 6 ຈຸດ ຍັງອີກ 2 ຈຸດ ທີ່ຍັງຄົງຄ້າງຈະຕ້ອງຮ່ວມກັນແກ້ໄຂ ຄື: ຈຸດເມືອງສາລະວັນ ກັບ ເມືອງທ່າແຕງ ແຂວງເຊກອງ, ຈຸດເມືອງຕະໂອ້ຍ ແຂວງສາລະວັນ ກັບ ເມືອງກະລຶມ ແຂວງເຊກອງ ເຊິ່ງປັດຈຸບັນແຂວງສາລະວັນແມ່ນໄດ້ລາຍງານໃຫ້ກະຊວງພາຍໃນຮັບຊາບ. ຄະນະປະຈຳສະພາປະຊາຊົນແຂວງໄດ້ອອກມະຕິຮັບຮອງວຽກງານເຂດແດນຂອງເມືອງພາຍໃນແຂວງສາລະວັນ ທີ່ເຊື່ອມຕໍ່ກັບແຂວງເຊກອງ ແລະ ແຂວງສະຫວັນນະເຂດ.

**I. ໃນໄລຍະຜ່ານມາສະພາປະຊາຊົນແຂວງໄດ້ປະຕິບັດໃນການຕິດຕາມກວດກາ 2 ວາລະແຫ່ງຊາດມີຜົນໄດ້ຮັບ ຫຼືຂໍ້ຫຍຸ້ງຍາກ ດັ່ງນີ້:**

***1.1 ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ:***

ການຕິດຕາມກວດກາວາລະແຫ່ງຊາດ ໂດຍສະເພາະບັນຫາສະພາບເສດຖະກິດ-ສັງຄົມ, ໄພເງິນເຟີ້, ສິນຄ້າລາຄາແພງ,ນ້ຳມັນແພງ ທີ່ປະຊາຊົນໄດ້ປະສົບພົບພໍ້ໃນປັດຈຸບັນນີ້ ເຊິ່ງສົ່ງຜົນກະທົບໂດຍກົງຢ່າງໜັກໜ່ວງຕໍ່ການດຳລົງຊີວິດຂອງປະຊາຊົນ; ສະພາປະຊາຊົນແຂວງສາລະວັນ ໄດ້ເອົາໃຈໃສ່ຊຸກຍູ້ຊ່ວຍອົງການປົກຄອງແຂວງໃຫ້ການສົ່ງເສີມຜູ້ປະກອບການ ຫຼືສ້າງຜະລິດຕະພັນພາຍໃນສະໜອງໃຫ້ແກ່ຕະຫຼາດພາຍໃນແຂວງ ເປັນຕົ້ນ: ການປູກຜັກ, ໝາກໄມ້, ການລ້ຽງປາ, ລ້ຽງໝູ; ພາຍຫຼັງທີ່ສະພາປະຊາຊົນແຂວງໄດ້ອອກຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດແລ້ວ ກໍໄດ້ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາເສດຖະກິດຕາມ 5 ວຽກຈຸດສຸມ ຢູ່ 8 ເມືອງທົ່ວແຂວງ ຄື:

- ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ;



- ສ້າງຄວາມເຂັ້ມແຂງທາງດ້ານການເກັບລາຍຮັບເຂົ້າງົບປະມານ;
- ຍົກສູງປະສິດທິຜົນການຄຸ້ມຄອງລາຍຈ່າຍງົບປະມານຂອງລັດ ສ້າງແຜນຍຸດທະສາດແກ້ໄຂໜີ້ສິນສາທາລະນະໃນແຕ່ລະໄລຍະ;
- ກວດກາຊຸກຍູ້ການປະຕິບັດກົດໝາຍກ່ຽວກັບການຄຸ້ມຄອງເງິນຕາ;
- ຍົກສູງປະສິດທິພາບການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ມີຜົນສັກສິດ.

***1.2 ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ:***

ພາຍຫຼັງສະພາແຫ່ງຊາດໄດ້ຮັບຮອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສບຕິດ ແລະ ກົມການເມືອງສູນກາງພັກ-ລັດຖະບານ ໄດ້ອອກຄຳສັ່ງວ່າດ້ວຍການຈັດຕັ້ງປະຕິວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ຄະນະປະຈຳພັກແຂວງສາລະວັນ, ໄດ້ອອກຄຳສັ່ງແນະນຳ, ສະບັບເລກທີ 02/ ຄຈພຂ, ລົງວັນທີ 30 ມິນາ 2022, ວ່າດ້ວຍ: ການເພີ່ມທະວີ ການຊີ້ນຳ-ນຳພາຂອງຄະນະພັກແຕ່ລະຂັ້ນ ຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ, ພ້ອມທັງນຳພາການຈັດຕັ້ງເຜີຍແຜ່ເຊື່ອມຊຶມໃຫ້ແກ່ພະນັກງານນຳພາ, ຫຼັກແຫຼ່ງ ໃນອົງການຈັດຕັ້ງພັກ-ລັດອົງການຈັດຕັ້ງມະຫາຊົນ ໃນຂັ້ນຕ່າງໆຢ່າງທົ່ວເຖິງ; ຄົ້ນຄວ້າ ແລະ ອອກນິຕິກຳ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດໃນແຕ່ລະຂັ້ນເປັນຕົ້ນ: ຂໍ້ຕົກລົງເລກທີ 136/ຈຂ. ສວ, ບົດແນະນຳ 085/ຄຈ.ສພຂ, ຄຳສັ່ງ 02/ຈຂ.ສວ; ສ້າງແຜນຈັດຕັ້ງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂັ້ນແຂວງ, ຂັ້ນເມືອງ ແລະ ບ້ານ (2021-2023), ແຕ່ງຕັ້ງ ຄະນະຮັບຜິດຊອບ, ກອງເລຂາຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນແຕ່ລະຂັ້ນ, ເຊິ່ງຂັ້ນບ້ານມີຄະນະຮັບຜິດຊອບຊີ້ນຳພະນັກງານ, ເຈົ້າໜ້າທີ່ຕຳຫຼວດ ທະຫານປະຈຳພາກສະໜາມທັງໝົດປະມານ 406 ຄົນ; ສຳຫຼວດເກັບຂໍ້ມູນ, ຂຶ້ນບັນຊີເປົ້າໝາຍເສບ, ຂາຍຢາເສບຕິດ ແລະ ຈຸດມົ້ວສຸມຕ່າງໆໃນຮາກຖານພ້ອມທັງ ຊີ້ນຳການແກ້ໄຂຊ່ວຍຫຼາຍວິທີການ, ເຊັ່ນ: ສຶກສາອົບຮົມ, ບົດບັນທຶກ ແລະ ປະຕິບັດມາດຕະການ ທາງກົດຫມາຍ; ການຈັດຕັ້ງຮາກຖານ, ຫົວໜ່ວຍຄອບຄົວ, ປະຊາຊົນແລະພາກສ່ວນທີ່ກ່ຽວຂ້ອງໃນສັງຄົມ ໄດ້ໃຫ້ຄວາມຮ່ວມໄມ້ຮ່ວມມື, ຈິງໃຈລາຍງານສະໜອງຂໍ້ມູນກຸ່ມເປົ້າໝາຍທີ່ພົວພັນຢາເສບຕິດໃຫ້ເຈົ້າໜ້າທີ່ແລະເປັນເຈົ້າການແກ້ໄຂບັນຫາຢາເສບຕິດຢ່າງຈິງຈັງ; ໄດ້ສະຫຼຸບຕີລາຄາການ ຈັດຕັ້ງປະຕິບັດວາລະແຫ່ງຊາດຢູ່ຂັ້ນແຂວງ 08 ຕົວເມືອງ ເພື່ອຕິດຕາມ, ກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດໃນແຕ່ລະຂັ້ນ.

ສະພາປະຊາຊົນແຂວງສາລະວັນ ໄດ້ມີສວນຮ່ວມຊຸກຍູ້ອົງການປົກຄອງແຂວງ ໂດຍໄດ້ຈັດຕັ້ງປະຕິບັດດ້ວຍຫຼາຍຮູບການ ໃນທົ່ວສັງຄົມ ເຊັ່ນ: ໄດ້ອອກຄຳແນະນຳ ຂອງຄະນະປະຈຳສະພາປະຊາຊົນແຂວງ ຈຳນວນ 1 ສະບັບ ເພື່ອແນະນຳການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບ; ໄດ້ຊຸກຍູ້ຕິດຕາມກວດກາ ໂດຍຜ່ານການເຂົ້າຮ່ວມກອງປະຊຸມສະຫຼຸບຕີລາຄາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດທົ່ວແຂວງສາລະວັນ; ລົງເຄື່ອນໄຫວຊຸກຍູ້ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາ, ເສດຖະກິດ-ສັງຄົມຂອງແຂວງແລະຕິດພັນກັບສອງວາລະແຫ່ງຊາດ 8 ເມືອງທົ່ວແຂວງ; ຕິດຕາມກວດກາວຽກງານສອງວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ຄ້າຍຄຸມຂັງ-ດັດສ້າງນາໄຊ; ສຶກສາອົບຮົມ, ໂຄສະນາເຜີຍແຜ່ກົດໝາຍລະບຽບການ ແລະຜົນຮ້າຍຂອງຢາເສບຕິດໄດ້ລົງເຜີຍແຜ່ບັນດາເອກະສານກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ຂັ້ນເມືອງ, ຂັ້ນກຸ່ມບ້ານໃນເວລາລົງເຄື່ອນໄຫວຢູ່ບັນດາເມືອງ.

- **ຂໍ້ຫຍຸ້ງຍາກ.**

1. ການສ້າງຄວາມຮັບຮູ້ເຂົ້າໃຈ ໃນທົ່ວສັງຄົມ ບໍ່ທັນທົ່ວເຖິງ;

2. ການປັບປຸງ ແລະ ສ້າງນິຕິກຳໃຕ້ກົດຫມາຍຈຳນວນຫນຶ່ງ ທີ່ກ່ຽວພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ຈຳນວນຫນຶ່ງບໍ່ທັນຄົບຖ້ວນ ເປັນຊ່ອງຫວ່າງພາໃຫ້ການຈັດຕັ້ງປະຕິບັດມີຄວາມຫຍຸ້ງຍາກ;

3. ການເກັບກຳຂໍ້ມູນ ແລະ ຂຶ້ນບັນຊີເປົ້າຫມາຍທີ່ພົວພັນຢາເສບຕິດເບື້ອງຕົ້ນ ບໍ່ລະອຽດ, ຊັດເຈນ ພາໃຫ້ການ ແກ້ໄຂບໍ່ຖືກເປົ້າຫມາຍ, ເຈົ້າໜ້າທີ່, ພະນັກງານຈຳນວນຫນຶ່ງທີ່ກ່ຽວພັນກັບຢາເສບຕິດ ບໍ່ໄດ້ຮັບການແກ້ໄຂເປັນສາເຫດໃຫ້ຢາເສບຕິດບໍ່ຫມົດຈັກເທື່ອ ການວິໄຈ, ດຳເນີນຄະດີຊັກຊ້າ, ງົບປະມານມີຈຳກັດບໍ່ມີສູນບຳບັດຮອງຮັບ, ຜູ້ຕິດຢາເສບຕິດຍັງປົນເປ ກັບຜູ້ຖືກຫາຈຳນວນຫຼາຍ;

4. ການຈັດຕັ້ງຕ່າງໆ ຢູ່ຂັ້ນຮາກຖານ ຫຼາຍບ່ອນ ບໍ່ທັນເຂັ້ມແຂງ, ກອງຫຼອນ, ປກສ ຈຳນວນຫນຶ່ງພົວພັນກັບ ບັນຫາຢາເສບຕິດ ແລະ ສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ, ພ້ອມນີ້, ບ້ານ, ຄອບຄົວ, ພໍ່ແມ່ປະຊາຊົນຈຳນວນໜຶ່ງ ຍັງບໍ່ທັນເຊື່ອມຊຶມເຂົ້າໃຈກ່ຽວກັບລະບຽບກົດຫມາຍ ແລະ ຜົນຮ້າຍຂອງຢາເສບຕິດ. ຈຳນວນຫນຶ່ງ ບໍ່ທັນກ້າລາຍງານຂໍ້ມູນກຸ່ມເປົ້າຫມາຍ ໂດຍສະເພາະກຸ່ມຂາຍ;

5. ການພົວພັນຮ່ວມມືກັບບັນດາປະເທດໃກ້ຄຽງຍັງບໍ່ທັນມີແຜນລະອຽດໃນການຈັດຕັ້ງປະຕິບັດ.

**II. ທິດທາງຈຸດສຸມແກ້ໄຂບັນຫາດັ່ງກ່າວໃນຕໍ່ໜ້າ ມີດັ່ງນີ້:**

1) ເປັນເຈົ້າການປະສານສົມທົບ, ຊຸກຍູ້ ແລະ ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງນິຕິກຳຂອງອົງການປົກຄອງທີ່ແທດເໝາະກັບສະພາບຕົວຈິງ ເພື່ອເປັນກົນໄກທີ່ສຳຄັນໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມພາຍໃນແຂວງ;

2) ສ້າງແຜນການລົງພົບປະຜູ້ມີສິດເລືອກຕັ້ງ ຕາມຈຸດຕ່າງໆໃຫ້ກວ້າງຂວາງ ແລະທົ່ວເຖິງ ຢູ່ອ້ອມຂ້າງແຂວງ, ບັນດາເມືອງ ຕິດພັນກັບການເກັບກຳຂໍ້ມູນ ຄຳສະເໜີ ແລະ ບັນດາຫາງສຽງຕ່າງໆ ຂອງສັງຄົມ;

3) ການເຄື່ອນໄຫວຕິດຕາມກວດກາສະເພາະຂອງແຂວງ ໂດຍຜ່ານກອງປະຊຸມຮ່ວມກັບພະແນກການ ເຊັ່ນ:ຕິດຕາມການກວດກາການປະຕິບັດໂຄງການລົງທຶນຂອງລັດ ແລະ ຕິດຕາມການກວດກາຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ຊີດເຊີຍທີ່ເກີດຈາກໂຄງການພັດທະນາ ໂດຍສະເພາະບັນດາໂຄງການທີ່ສະພາແຫ່ງຊາດຮັບຮອງ; ໂຄງການທີ່ສະພາປະຊາຊົນແຂວງຮັບຮອງເອົາ ແລະ ໂຄງການທີ່ເປັນຫາງສຽງສັງຄົມ; ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ແລະບັນດາເຜົ່າ;

4) ກະກຽມສະຫຼຸບ, ກວດກາ ແລະ ປະເມີນ 2 ວາລະແຫ່ງຊາດ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ຢ່າງມີຈຸດສຸມ;

ທ່ານປະທານສະພາປະຊາຊົນແຂວງ ຍັງໄດ້ມີຄຳເຫັນສະເໜີມາຍັງປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ ແລະ ສາສະໜາ ຈົ່ງພ້ອມກັນສາມັກຄີເປັນຈິດໜຶ່ງໃຈດຽວ ສືບຕໍ່ປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາໃຫ້ບັນລຸຈຸດໝາຍ: ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ, ມີປະຊາທິປະໄຕ ແລະ ຍຸຕິທຳ; ຈົ່ງມີສະຕິໃນການນຳໃຊ້ສື່ສັງຄົມອອນລາຍຮັບຮູ້ຂໍ້ມູນຂ່າວສານທີ່ເປັນປະໂຫຍດ,ຕອບຕ້ານການໃສ່ຮ້າຍປ້າຍສີຂອງກຸ່ມຄົນທີ່ບໍ່ຫວັງດີຕໍ່ພັກ-ລັດຂອງ ສປປ ລາວ; ຂ້າພະເຈົ້າເຫັນວ່າ ການພັດທະນາປະເທດຊາດ ບໍ່ປາສະຈາກສິ່ງທີ່ກະທົບຕໍ່ປະຊາຊົນ, ແຕ່ຂໍໃຫ້ປະຊາຊົນເຮົາຈົ່ງເຂົ້າໃຈ ແລະ ເຫັນອົກເຫັນໃຈພັກ-ລັດ.





# ຮອງປະທານ ສປນວ ຕິດຕາມກວດກາວຽກງານ ຂົງເຂດຍຸຕິທຳ ຢູ່ສານປະຊາຊົນນະຄອນຫຼວງວຽງຈັນ



(ສພຊ) ວັນທີ 27 ກຸມພາ 2024, ທ່ານ ບຸນທາມ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ສານປະຊາຊົນນະຄອນຫຼວງວຽງຈັນໂດຍການຕ້ອນຮັບຂອງທ່ານນາງເກສອນ ພົນລັກ ປະທານສານປະຊາຊົນນະຄອນຫຼວງວຽງຈັນ, ມີຮອງປະທານສານ, ບັນດາທ່ານຫົວໜ້າຄະນະສານ, ຫ້ອງການແລະຈັດຕັ້ງ ເຂົ້າຮ່ວມ.

ໃນກອງປະຊຸມນີ້, ທ່ານນາງ ເກສອນ ພົນລັກ ໄດ້ລາຍງານໃຫ້ຊາບກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ ເຊິ່ງສະແດງໃຫ້ເຫັນໄດ້ເຖິງຂໍ້ສະດວກຂໍ້ຫຍຸ້ງຍາກດ້ານສະພາບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງສານປະຊາຊົນນະຄອນຫຼວງວຽງຈັນຄື: ຂໍ້ສະດວກ ເນື່ອງຈາກມີບັນດາກົດໝາຍ ແລະ ນິຕິກຳຕ່າງໆໃຕ້ກົດໝາຍເປັນບ່ອນອີງແລະເປັນຄູ່ມືອັນສຳຄັນ ໃນການຈັດຕັ້ງປະຕິບັດວຽກງານຂອງສານປະຊາຊົນ ໃນການຄົ້ນຄວ້າ, ພິຈາລະນາແກ້ໄຂຄະດີ; ຄຽງຄູ່ກັບຂໍ້ສະດວກນັ້ນ, ຍັງມີບາງຂໍ້ຫຍຸ້ງຍາກ ເປັນຕົ້ນການອອກໝາຍຮຽກ, ໝາຍເຊີນ ຄູ່ຄວາມບໍ່ໃຫ້ການຮ່ວມມື, ຄະດີທີ່ພົວພັນກັບຫຼາຍພາກສ່ວນ ເປັນຕົ້ນ ບັນດາພະແນກການຈຳນວນໜຶ່ງມີຄວາມຫຍຸ້ງຍາກ, ໃຊ້ເວລາດົນ ແລະ ບາງບັນຫາທີ່ພົວພັນກັບພະແນກໂຍທາທິການ ແລະຂົນສົ່ງ ເຫັນວ່າການປະເມີນມູນຄ່າຕ່າງໆບາງຄັ້ງບໍ່ສາມາດປະເມີນໄດ້, ການເກັບກຳຂໍ້ມູນ ແລະ ການເອົາຄຳໃຫ້ການຂອງພາກສ່ວນກ່ຽວຂ້ອງຍັງບໍ່ທັນຄົບຖ້ວນເທົ່າທີ່ຄວນ; ຈາກນັ້ນ, ໄດ້ມີການແລກປ່ຽນຄຳຄິດຄຳເຫັນເຊິ່ງກັນ ແລະ ກັນ ພ້ອມທັງຮັບເອົາບາງບັນຫາ, ຂໍ້ຫຍຸ້ງຍາກທີ່ທາງສານປະຊາຊົນນະຄອນຫຼວງວຽງຈັນ ໄດ້ພົບພໍ້ເພື່ອນຳໄປປຶກສາຫາລືແລະສະເໜີຕໍ່ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ.

ຕອນທ້າຍກອງປະຊຸມ, ທ່ານ ບຸນທາມ ພຸດທະວົງສາ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະນຳຂອງສານປະຊາຊົນ ແລະ ທຸກຂະແໜງການທີ່ໄດ້ເອົາໃຈໃສ່ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນ ຈຶ່ງໄດ້ຮັບຜົນສຳເລັດຫຼາຍດ້ານໃນໄລຍະຜ່ານມາ ແລະ ໃຫ້ສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍທີ່ກຳນົດໄວ້ໃນແຜນປີໃຫ້ສຳເລັດ ແລະ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

**(ນັກຂ່າວ: ສປນວ)**

# ສືບຕໍ່ເຜີຍແຜ່ຜົນສຳເລັດກອງປະຊຸມ ສະໄໝສາມັນເທື່ອທີ 6 ຢູ່ເມືອງບຸນເໜືອ

(ສພຊ) ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ນຳພາໂດຍ ທ່ານ ສົມຈິດ ທັບລະກອນ ຮອງປະທານສະພາປະຊາຊົນແຂວງ, ທັງເປັນ ສສຊ ປະຈຳເຂດເລືອກຕັ້ງພ້ອມດ້ວຍບັນດາທ່ານສສຂ ໂດຍມີທ່ານ ພັທ. ຄຳດາ ໂສລະພົມ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງ, ທ່ານ ນາງ ລຸນຄຳວົງໃຈ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ທ່ານ ສຸວັນພູ ລາວລີ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໃນວັນທີ 21 ກຸມພາ 2024 ຢູ່ເທດສະບານເມືອງບຸນເໜືອ ລວມມີ 2 ຈຸດ: ຈຸດສະພາປະຊາຊົນແຂວງເຂົ້າຮ່ວມມີບັນດາທ່ານຄະນະນຳ, ພະນັກງານ-ລັດຖະກອນ ຂອງພະແນກ, ອົງການລັດທຽບເທົ່າຂັ້ນແຂວງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ພ້ອມດ້ວຍພະນັກງານ-ລັດຖະກອນ ຈາກສະພາປະຊາຊົນແຂວງ ແລະ ຈຸດໂຮງຮຽນການເມືອງ-ການປົກຄອງແຂວງເຂົ້າຮ່ວມມີຄະນະນຳ, ຄູອາຈານ, ນັກສຶກສາໂຮງຮຽນການເມືອງ-ການປົກຄອງແຂວງ ແລະພະນັກງານແພດໝໍຂອງໂຮງໝໍແຂວງຜົ້ງສາລີ.

ການພົບປະໃນຄັ້ງນີ້, ແມ່ນເພື່ອນຳເອົາເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຕິດພັນກັບ 2 ວາລະແຫ່ງຊາດ, ບົດຊີ້ແຈງຂອງບັນດາທ່ານລັດຖະມົນຕີ ໃນກອງປະຊຸມສະພາແຫ່ງຊາດ ໄປຈັດຕັ້ງຜັນຂະຫຍາຍໃຫ້ຜູ້ມີສິດເລືອກຕັ້ງ ກໍຄືພະນັກງານຫຼັກແຫຼ່ງທົ່ວແຂວງ ຮັບຮູ້, ເຂົ້າໃຈ ໄດ້ຢ່າງກວ້າງຂວາງ ທັງເກັບກຳບັນດາສະພາບການທີ່ມີຫາງສຽງໃນສັງຄົມ, ຄຳຄິດເຫັນ ຫຼື ຄຳສະເໜີຕ່າງໆ ເພື່ອນຳມາຄົ້ນຄວ້າ ແລະ ສົ່ງໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂຕາມພາລະບົດບາດ.

ຜ່ານການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາຜູ້ເຂົ້າຮ່ວມໄດ້ໃຫ້ຄວາມສຳຄັນ ແລະ ມີຄວາມເອົາໃຈໃສ່ໃນການເຊື່ອມຊຶມ, ຮັບຟັງຕໍ່ການບັນຍາຍຂອງ ສສຊ ແລະ ສສຂ ເຮັດໃຫ້ຜູ້ແທນກອງປະຊຸມຮັບຮູ້, ເຂົ້າໃຈຕໍ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນຄັ້ງນີ້ ໄດ້ຢ່າງເລິກເຊິ່ງ ແລະ ເຫັນໄດ້ເຖິງສະພາບບັນຫາເສດຖະກິດຂອງຊາດ ກໍຄືໃນແຂວງຜົ້ງສາລີ ທີ່ພົບວິກິດການຕ່າງໆໃນປັດຈຸບັນ ເປັນຕົ້ນ ໄພເງິນເຟີ້, ລາຄາສິນຄ້າ, ລາຄານ້ຳມັນ ແລະ ອື່ນໆ.

**(ພອນແກ້ວປະເສີດ ສຸລີວົງ)**




# ເຜີຍແຜ່ຄຳແນະນຳການສ້າງແຜນການ ສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍ



(ສພຊ) ສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມເຜີຍແຜ່ຄຳແນະນຳການສ້າງແຜນ ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໄລຍະ 5 ປີ (2026-2030) ຕິດພັນກັບການສ້າງນິຕິກຳ ແລະ ປັບປຸງການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຈຳນວນ 4 ສະບັບ; ໃນວັນທີ 6 ກຸມພາ 2024 ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ ເຂົ້າຮ່ວມມີທ່ານສຸກສະຫວັນ ຈັນທິສຸກ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ມີຄະນະກຳມະການ, ຄະນະເລຂາທິການ ແລະ ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງທີ່ຮັບຜິດຊອບສ້າງນິຕິກຳໃຕ້ກົດໝາຍ ເຂົ້າຮ່ວມ.

ທັງນີ້, ເພື່ອເຜີຍແຜ່ຄຳແນະນຳ ກ່ຽວກັບການສ້າງແຜນການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ ໄລຍະ 5 ປີ (2026-2030) ໃຫ້ອົງການປົກຄອງແຂວງ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ມີຄວາມເປັນເອກະພາບ ແລະ ເປັນບ່ອນອີງກະກຽມກຳນົດເວລາແຜນການສ້າງ, ຫົວຂໍ້, ເນື້ອໃນການສ້າງໃໝ່ ແລະປັບປຸງນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ ໃຫ້ມີຄວາມຖືກຕ້ອງ ແລະຊັດເຈນ ສາມາດບັນຈຸຈຳນວນຮ່າງນິຕິກຳທີ່ຈະສ້າງໃໝ່ ແລະ ປັບປຸງໃສ່ແຕ່ລະປີ ແຕ່ປີ 2026-2030 ຮັບຮອງເອົາໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງ; ເພື່ອຜັນຂະຫຍາຍເນື້ອໃນຂອງມະຕິກອງປະຊຸມສະພາປະຊາຊົນແຂວງທີ່ໄດ້ຮັບຮອງກ່ຽວກັບການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ ໃນວາລະຂອງກອງປະຊຸມສະໄໝສາມັນເທື່ອທີ 5 ທີ່ຜ່ານການຕິດຕາມກວດກາ ການຈັດຕັ້ງປະຕິບັດທີ່ຍັງບໍ່ທັນສອດຄ່ອງເຫດເໝາະກັບສະພາບຄວາມເປັນຈິງ ແລະ ສະເໜີສະພາປະຊາຊົນແຂວງ ເພື່ອປັບປຸງນິຕິກຳ ແລະ ເພື່ອເປັນການກະກຽມແຕ່ຫົວທີ ໃຫ້ແກ່ການສ້າງນິຕິກຳໃຕ້ກົດໝາຍໃໝ່ ແລະ ປັບປຸງບາງສະບັບ ສາມາດຮັບປະກັນເນື້ອໃນຢ່າງຮອບດ້ານ ທີ່ຈະນຳເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ.

ທ່ານ ຈັນທະຄາດ ສີສຸພັນ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໄດ້ເຜີຍແຜ່ເອກະສານ ຄຳແນະນຳຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 32/ຄຈສຂ.ສວ ກ່ຽວກັບການສ້າງແຜນ ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໄລຍະ 5 ປີ (2026-2030) ໃຫ້ຜູ້ແທນກອງປະຊຸມໄດ້ຮັບຮູ້ຢ່າງລະອຽດຕໍ່ເນື້ອໃນຂອງເອກະສານດັ່ງກ່າວ; ຫຼັງຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປຶກສາຫາລືຕໍ່ກັບວຽກງານການປະເມີນ ແລະ ການສ້າງແຜນ, ກະກຽມການສ້າງນິຕິກຳໃຕ້ກົດໝາຍ ດ້ວຍບັນຍາກາດອັນຟົດຟື້ນ ແລະ ກົງໄປກົງມາ.

**(ຄຳພົນ ພົມມະຈັນ)**

# ສພຂ ຫຼວງນ້ຳທາ ມອບເຄື່ອງໄຟຟ້າແສງຕາເວັນ ໃຫ້ກອງບັນຊາການທະຫານແຂວງ

(ສພຊ) ໃນວັນທີ 29 ກຸມພາ 2024 ຢູ່ຫ້ອງປະຊຸມ ສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ມີພິທີມອບ-ຮັບ ເຄື່ອງພະລັງງານໄຟຟ້າແສງຕາເວັນ ໃຫ້ກອງບັນຊາການທະຫານແຂວງຫຼວງນ້ຳທາ ມອບໂດຍທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງ ແລະ ຮັບໂດຍທ່ານ ພັອ. ບຸນມີ ໄຊປະສິດ ຮອງຫົວໜ້າກອງບັນຊາການທະຫານແຂວງ ເຂົ້າຮ່ວມມີບັນດາທ່ານຮອງປະທານສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ຄະນະນຳຂອງກອງບັນຊາການທະຫານແຂວງ ແລະ ວິຊາການກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ ໂດຍເຄື່ອງທີ່ນຳມາມອບໃນຄັ້ງນີ້ແມ່ນໄດ້ຮັບການຊ່ວຍເຫຼືອຈາກສະພາແຫ່ງຊາດ.

ໃນການມອບຄັ້ງນີ້ແມ່ນເພື່ອນຳໄປຊ່ວຍເຫຼືອກອງພັນ 418 ທີ່ເມືອງວຽງພູຄາ ແຂວງຫຼວງນ້ຳທາ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານປ້ອງກັນຊາດ ໃນເຂດຊາຍແດນໃຫ້ມີປະສິດທິພາບສູງຂຶ້ນ ເຊິ່ງອຸປະກອນເຄື່ອງພະລັງງານໄຟຟ້າແສງຕາເວັນ ປະກອບມີ ຈຳນວນ 3 ຊຸດ ປະກອບມີ: ແຜງໂຊລາເຊວ ຈຳນວນ 6 ແຜງ (ຊຸດລະ 2 ແຜງ), ຖານຈັບແຜງໂຊລາເຊວ ຈຳນວນ 3 ອັນ, ໝໍ້ໄຟຈຳນວນ 6 ໜ່ວຍ (ຊຸດລະ 2 ໜ່ວຍ), ກ່ອງໃສ່ໝໍ້ໄຟຈຳນວນ 6 ອັນ (ຊຸດລະ 2 ອັນ), ຮາວຈັບດອກໄຟຈຳນວນ 3 ອັນ, ດອກໄຟຈຳນວນ 3 ດອກ, ເສົາໄຟຈຳນວນ 3 ເສົາ, ຂໍ້ຕໍ່ເສົາ-ແຜງ ຈຳນວນ 3 ອັນ, ສາຍໄຟຈຳນວນ 45 ແມັດ (ຊຸດລະ 15 ແມັດ), ກ່ອງບັນຊາລະບົບ(ຊາດເຈີ) ຈຳນວນ 3 ອັນ, ເຫຼັກເສັ້ນປ້ອງອ້ອຍ ຈຳນວນ 3 ອັນ, ເຫຼັກຈັບຕີນເສົາຈຳນວນ 12 ໂຕ, ນັອດປະກອບ ຈຳນວນ 3 ຖົງ ແລະ ແຜ່ນເຫຼັກຮອງຕີນເສົາ ຈຳນວນ 3 ແຜ່ນ ລວມມູນຄ່າທັງໝົດ 56 ລ້ານກວ່າກີບ.

**(ນາງ ວັນນີ)**




# ຄະນະເລຂາທິການ ສພຂ ສາລະວັນ ສະຫຼຸບ ການເຄື່ອນໄຫວວຽກງານຮອບດ້ານໄລຍະກາງສະໄໝ



(ສພຊ) ຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ສາລະວັນ ສຳເລັດກອງປະຊຸມການສະຫຼຸບການເຄື່ອນໄຫວວຽກງານຮອບດ້ານກາງສະໄໝແຜນການ 5 ປີ (2021-2025) ແລະ ທິດທາງແຜນການໄລຍະທ້າຍສະໄໝ ແລະ ສະຫຼຸບການເຄື່ອນໄຫວວຽກງານຮອບດ້ານ ປະຈຳປີ 2023 ແລະ ວາງທິດທາງແຜນການປະຈຳປີ 2024 ໃນວັນທີ 2 ກຸມພາ 2024 ຢູ່ສະໂມສອນເມືອງສາລະວັນ; ໂດຍການເຂົ້າຮ່ວມຂອງທ່ານ ສີເຮັ່ງ ທອມສີມ ບັດຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ແລະ ເປັນປະທານກອງປະຊຸມຂອງທ່ານ ສຸດທິໂສມ ແກ້ວໄຊຍະວົງ ຮອງເລຂາທິການສະພາປະຊາຊົນແຂວງ; ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ທ່ານຫົວໜ້າຫ້ອງວ່າການປົກຄອງແຂວງ ແລະ ແຂກທີ່ຖືກເຊີນຈາກພະແນກການອ້ອມຂ້າງແຂວງ ພ້ອມດ້ວຍບັນດາທ່ານຫົວໜ້າ-ຮອງຫົວໜ້າຂະແໜງການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນໂອກາດນີ້, ທ່ານ ສຸດທິໂສມ ແກ້ວໄຊຍະວົງ ໄດ້ຂຶ້ນຜ່ານສອງເອກະສານຄື: ຮ່າງບົດສະຫຼຸບເຄື່ອນໄຫວວຽກງານຮອບດ້ານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ແລະ ຮ່າງບົດສະຫຼຸບການເຄື່ອນໄຫວຮອບດ້ານ ປະຈຳປີ 2023 ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2024 ຂອງຄະນະເລຂາທິການ ສພຂ ໂດຍໄດ້ເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ ສພຂ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ, ຄຸ້ມຄອງວຽກງານບໍລິຫານ ແລະ ການເງິນ ແລະ ຄຸ້ມຄອງວຽກງານຈັດຕັ້ງ-ພະນັກງານສາມາດເຄື່ອນໄຫວວຽກງານມີຜົນສຳເລັດທີ່ພົ້ນເດັ່ນ ເປັນຕົ້ນ: ສຳເລັດການກະກຽມບັນດາເອກະສານກອງປະຊຸມ, ປະຈຳເດືອນ ແລະ ປະຈຳປີ ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14, ກອງປະຊຸມຮ່ວມກັບອົງການປົກຄອງແຂວງ ແລະ ກອງປະຊຸມສະໄໝສາມັນຄັ້ງປະຖົມມະລຶກ ແລະ ເທື່ອທີ 2-6 ຂອງສະພາປະຊາຊົນແຂວງ, ໄດ້ຕິດຕາມການເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນເທື່ອທີ 2-5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໄດ້ 8 ເມືອງ, ມີຈຳນວນ 148 ຈຸດ, ກວມເອົາ 32,8% ຂອງແຜນການ 5 ປີ, ມີຜູ້ເຂົ້າຮ່ວມ 22.523 ຄົນ, ຍິງ 9.605 ຄົນ ກວມເອົາ 32,07% ຂອງແຜນການ 5 ປີ; ມູນຄ່າການຊ່ວຍເຫຼືອທັງໝົດ 308.604.000 ກີບ ບັນດາຜົນງານດັ່ງກ່າວຍ້ອນໄດ້ຮັບການຊີ້ນຳ-ນຳພາຢ່າງໃກ້ຊິດຈາກຄະນະປະຈຳສະພາປະຊາຊົນແຂວງຢ່າງຮອບດ້ານແລະເປັນປົກກະຕິ, ມີກົດໝາຍ ແລະ ນິຕິກຳຂອງຄະນະປະຈຳສະພາປະຊາຊົນແຂວງ ເປັນບ່ອນອີງ, ມີການປັບປຸງແບບແຜນວິທີເຮັດວຽກຂອງກົງຈັກເສນາທິການ, ແບ່ງວຽກງານແບ່ງຄວາມຮັບຜິດຊອບໃນການປະຕິບັດວຽກງານຢ່າງລະອຽດຈະແຈ້ງ ຈຶ່ງເຮັດໃຫ້ການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງມີຜົນສຳເລັດຕາມແຜນທີ່ວາງໄວ້ ແລະ ກໍຍັງມີບາງດ້ານທີ່ຈະໄດ້ສຶກສາຄົ້ນຄວ້າປັບປຸງ ເພື່ອຮັບປະກັນການເປັນເສນາທິການ ເຮັດໃຫ້ການເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ທີ່ຍັງບໍ່ທັນສາມາດບັນລຸຕາມຄາດໝາຍຕາມທີ່ກົດໝາຍກຳນົດ ໂດຍສະເພາະວຽກງານໃນຄວາມຮັບຜິດຊອບຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເຊິ່ງຕິດພັນໂດຍກົງກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ອື່ນໆ.

ຫຼັງຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ສຸມໃສ່ຄົ້ນຄວ້າປະກອບຄຳຄິດຄຳເຫັນເຂົ້າໃສ່ວຽກງານຂອງຄະນະເລຂາທິການ ແລະ ຮ່າງບົດສະຫຼຸບດັ່ງກ່າວ ໃຫ້ມີເນື້ອໃນຄົບຖ້ວນ, ຖືກຕ້ອງ ແລະ ແທດເໝາະກັບສະພາບຄວາມເປັນຈິງ.

**(ດີລຳພົນ ພົມມະຈັນ)**

# ສຳເລັດການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ຢູ່ 2 ເມືອງ ແຂວງຫຼວງພະບາງ



(ສພຊ) ໃນລະຫວ່າງວັນທີ 13-22 ກຸມພາຜ່ານມານີ້, ທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ 5 ບ້ານ ເມືອງໂພນໄຊ ຄື: ຈອມຈຽງ, ເຮືອໂດຍ, ຫ້ວຍລຸ້ງສູງ, ຫ້ວຍປຽນ, ສັນກາງ ແລະ 2 ບ້ານ ຂອງເມືອງຈອມເພັດ ຄື: ຈ່ານໃຕ້ ແລະ ຈ່ານເໜືອ.

ໂອກາດດັ່ງກ່າວ, ໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຕ່ລະບ້ານຂອງ 2 ເມືອງດັ່ງກ່າວ; ຈາກນັ້ນ, ທ່ານ ນາງ ວັນດີ ບຸດທະສະວົງ ກໍໄດ້ເຜີຍແຜ່ບັນດາເນື້ອໃນຈິດໃຈທີ່ສຳຄັນຂອງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໂດຍທ່ານໄດ້ຍົກໃຫ້ເຫັນເຖິງຜົນສຳເລັດອັນພົ້ນເດັ່ນກ່ຽວກັບສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນຖານະເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນ ແລະ ວິທີການແກ້ໄຂຄວາມຫຍຸ້ງຍາກທາງເສດຖະກິດແລະການເງິນ, ການແກ້ໄຂບັນຫາຢາເສບຕິດ ແລະ ປາກົດການຫຍໍ້ທໍ້ໃນສັງຄົມ, ທັງນີ້ ກໍເພື່ອເຮັດໃຫ້ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນ ຕະຫຼອດຮອດພໍ່ແມ່ປະຊາຊົນ ໄດ້ຮັບຮູ້ ແລະ ເຂົ້າໃຈ ພາລະບົດບາດ ໃນການພິຈາລະນາ ແລະ ຮັບຮອງບັນຫາສຳຄັນຕ່າງໆຂອງຊາດ, ຂອງແຂວງ ເພື່ອເຮັດໃຫ້ການຄຸ້ມຄອງ-ບໍລິຫານລັດ, ຄຸ້ມຄອງສັງຄົມໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທຳ ຕໍ່ກັບຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ກໍໄດ້ຮັບການຊີ້ແຈງກັບທີ່ໄປແລ້ວຈຳນວນໜຶ່ງ, ສ່ວນບັນຫາທີ່ຍັງບໍ່ໄດ້ຮັບການຊີ້ແຈງ ແມ່ນຈະໄດ້ນຳໄປສົມທົບກັບພະແນກການແລະເມືອງ ເພື່ອຄົ້ນຄວ້າແກ້ໄຂຕາມຂັ້ນຕອນ.

ໃນໂອກາດທີ່ໄດ້ເຄື່ອນໄຫວ ຢູ່ 2 ເມືອງດັ່ງກ່າວ, ຄະນະ ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ (ເສື້ອກັນໜາວ), ກະຕິກໃສ່ນ້ຳ ແລະເງິນສົດຈຳນວນໜຶ່ງ ມອບໃຫ້ແຕ່ລະບ້ານເພື່ອນຳໄປຊ່ວຍເຫຼືອປະຊາຊົນຜູ້ທຸກຈົນ ລວມມູນຄ່າທັງໝົດ 26 ລ້ານກວ່າກີບ.

**(ເຜັດສະໝອນ)**

# ສະພາບພົ້ນເດັ່ນຢູ່ແຂວງສະຫວັນນະເຂດ

ໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ທ່ານ ກົງແກ້ວ ມີອໍລະຈັກ ປະທານສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ກ່ຽວກັບສະພາບການພົ້ນເດັ່ນຈຳນວນໜຶ່ງ ພາຍໃນເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ວ່າ:

1. ບັນຫາຢາເສບຕິດ, ເຖິງແມ່ນວ່າພັກ-ລັດພວກເຮົາສຸມໃສ່ສຸດຂີດຕໍ່ວຽກງານດັ່ງກ່າວ ໂດຍການຈັດຕັ້ງວາລະແຫ່ງຊາດຂຶ້ນ ເພື່ອແກ້ໄຂ. ໄລຍະຜ່ານມາ, ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ແລະ ບັນດາພາກສ່ວນຕ່າງໆກໍໄດ້ສຸມໃສ່ ເຊິ່ງເຫັນໄດ້ວ່າມີຜົນງານຫຼາຍຢ່າງ, ບັນດາຄະດີທີ່ເຮັດໄດ້ກໍມີຫຼາຍ, ແກ້ໄຂບັນດາເປົ້າໝາຍຄ້າຂາຍ-ເສບຖືວ່າເປັນຜົນງານອັນໃຫຍ່ຫຼວງ. ແຕ່ຄຽງຄູ່ກັນນັ້ນ, ບັນຫາຢາເສບຕິດໃນປັດຈຸບັນ ກໍຮູ້ສຶກວ່າເພີ່ມຂຶ້ນຫຼາຍເຊິ່ງມັນສະແດງອອກໃນປັດຈຸບັນຢາເສບຕິດ ທີ່ເຂົາເຈົ້າເອົາມາເສບນັ້ນ ເຫັນວ່າມີຫຼາຍປະເພດ, ຫຼາຍຊະນິດ ເຈົ້າໜ້າທີ່ເຮັດໜ້າທີ່ວິຊາສະເພາະກໍຍັງບໍ່ສາມາດຮູ້ໄດ້ວ່າເປັນຢາປະເພດໃດ ເພາະມັນຜະລິດມາໃໝ່ຕະຫຼອດ. ເປັນຫຍັງຈຶ່ງເວົ້າແນວນັ້ນ, ເພາະວ່າໃນຢານັ້ນ ເຈົ້າໜ້າທີ່ພວກເຮົາກໍບໍ່ສາມາດວິໄຈໄດ້ວ່າໃນຢາເສບຕິດນັ້ນ ມີສານເສບຕິດປະເພດໃດ?. ດັ່ງນັ້ນ, ໃນທັດສະນະສ່ວນຕົວກ່ຽວກັບວາລະແຫ່ງຊາດ ຄວນໄດ້ສືບຕໍ່ ແລະ ຈັດຕັ້ງປະຕິບັດແຂງແຮງ ແລະເດັດຂາດກວ່າເກົ່າ;

2. ບັນຫາພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍສະເພາະແມ່ນການສະໜອງທຶນໃຫ້ທຸລະກິດຂະໜາດນ້ອຍ, ຂະໜາດກາງ ຜ່ານການຕິດຕາມກວດກາເຫັນວ່າຍັງຈັດຕັ້ງປະຕິບັດບໍ່ທັນໄດ້ເທື່ອ;ຜູ້ທີ່ສາມາດເຂົ້າເຖິງແຫຼ່ງທຶນດັ່ງກ່າວລ້ວນແລ້ວແຕ່ແມ່ນຜູ້ທີ່ມີຖານະຫຼືທຸລະກິດທີ່ໃຫຍ່ໂຕແລ້ວ; ໝາຍຄວາມວ່າປະຊາຊົນທີ່ຢູ່ທ້ອງຖິ່ນແມ່ນບໍ່ມີໂອກາດທີ່ຈະເຂົ້າເຖິງແຫຼ່ງທຶນດັ່ງກ່າວ. ຕໍ່ບັນຫາຫານີ້, ສະເໜີລັດຖະບານຊ່ວຍລົງຊຸກຍູ້, ຕິດຕາມກວດກາ ລະອຽດຕື່ມ ເພື່ອໃຫ້ທຶນດັ່ງກ່າວຖືກກັບນະໂຍບາຍຂອງພັກ-ລັດວາງອອກ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;



3. ບັນຫາການເຊົ່າ-ສຳປະທານທີ່ດິນ; ບັນຫານີ້ລັດຖະບານພວກເຮົາກໍໄດ້ເອົາໃຈໃສ່ ໂດຍການອະນຸມັດທຶນມະຫາສານ ເພື່ອຈັດຕັ້ງປະຕິບັດການຈັດສັນທີ່ດິນໃຫ້ສຳເລັດຕາມແຜນການ ແຕ່ວ່າໃນການຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນທ້ອງຖິ່ນແມ່ນຍັງມີບັນຫາຫຼາຍຢ່າງທີ່ຈະຕ້ອງໄດ້ແກ້ໄຂ ເປັນຕົ້ນການເຊົ່າ-ສຳປະທານທີ່ດິນໃນປັດຈຸບັນແມ່ນນາຍທຶນເຂົາເຈົ້າຕົກລົງເຊົ່າ-ສຳປະທານ ຫຼື ຊື້ທີ່ດິນນຳອົງການປົກຄອງບ້ານ ກໍຄືປະຊາຊົນພາຍໃນບ້ານໂດຍກົງ ໂດຍສະເພາະແມ່ນຢູ່ໃນເຂດຫ່າງໄກສອກຫຼີກຕໍ່ກັບບັນຫານີ້ເຮັດໃຫ້ພະນັກງານການນຳພວກເຮົາບໍ່ຮູ້, ເວລາເກີດມີຜົນກະທົບຕ່າງໆນາໆ ທາງພາກລັດພວກເຮົາຈຶ່ງໄດ້ຮັບຮູ້ ແລະ ລົງໄປເກັບກຳຂໍ້ມູນເພື່ອແກ້ໄຂ; ດັ່ງນັ້ນສະເໜີໃຫ້ລັດຖະບານເອົາໃຈໃສ່ທີ່ສຸດຕໍ່ກັບການຊຸກຍູ້ການຈັດຕັ້ງອອກໃບຕາດິນໃຫ້ພໍ່ແມ່ປະຊາຊົນໃຫ້ສຳເລັດ.

4. ໃນຖານະເປັນຕົວແທນແຫ່ງສິດ ແລະຜົນປະໂຫຍດຂອງພໍ່ແມ່ປະຊາຊົນບັນດາເຜົ່າເວົ້າລວມ, ເວົ້າສະເພາະແມ່ນປະຊາຊົນຊາວແຂວງສະຫວັນນະເຂດ ຂ້າພະເຈົ້າຕາງໜ້າໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ຂໍຝາກຄວາມຢ້ຽມຢາມຖາມຂ່າວພໍ່ແມ່ປະຊາຊົນທຸກທົ່ວໜ້າ ແລະ ຂໍຮຽກຮ້ອງມາຍັງພໍ່ແມ່ປະຊາຊົນຈົ່ງສາ ມັກຄີກັນເປັນປຶກແຜ່ນແໜ້ນໜາ, ເປັນຈິດໜຶ່ງໃຈດຽວ ພ້ອມກັນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດເຮືອນຊານບ້ານຊ່ອງຂອງພວກເຮົາ. ອີກເທື່ອໜຶ່ງ ຂໍໃຫ້ພໍ່ແມ່ປະຊາຊົນຈົ່ງໃຫ້ການສະໜັບສະໜູນສະມາຊິກສະພາແຫ່ງຊາດກໍຄືສະມາຊິກສະພາປະຊາຊົນແຂວງ ດ້ວຍການເຂົ້າຮ່ວມ ແລະ ແລກປ່ຽນຄຳເຫັນເຫັນ, ພ້ອມກັນນັ້ນໃນຖານະປະຊາຊົນເປັນເຈົ້າຂອງປະເທດຊາດ ກໍສະເໜີໃຫ້ບັນດາທ່ານຈົ່ງຕິດຕາມກວດກາໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງລັດ ແລະ ນິຕິກຳອື່ນໆ ຮ່ວມກັບສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນແຂວງ ເພື່ອພ້ອມກັນຊຸກຍູ້ການຈັດຕັ້ງປະຕິບັດວຽກງານຕ່າງໆ ທີ່ພັກ-ລັດກຳນົດອອກຢ່າງມີຜົນສຳເລັດອັນຈົບງາມ.

## ສ້າງຄວາມເຂັ້ມແຂງໃຫ້ ສສຂ, ພະນັກງານຊ່ວຍວຽກ ສສຂ ວຽງຈັນ




(ສພຊ) ໃນລະຫວ່າງວັນທີ 06-07 ມີນາ 2024 ຢູ່ເມືອງຊະນະຄາມ ແຂວງວຽງຈັນ, ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ຈັດກອງປະຊຸມເຝິກອົບຮົມກ່ຽວກັບການເກັບກຳ, ການຄົ້ນຄວ້າວິໄຈບັນຫາ, ການຮ່າງມະຕິກອງປະຊຸມສະພາປະຊາຊົນແຂວງ ແລະ ການສະຫຼຸບສັງລວມລາຍງານ, ການຊຸກຍູ້, ຕິດຕາມກວດກາການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ໃຫ້ແກ່ສະມາຊິກສະມາຊິກສະພາປະຊາຊົນແຂວງ (ສສຂ), ພະນັກງານ-ລັດຖະກອນ ສພຂ ແລະ ພະນັກງານຊ່ວຍວຽກ ສສຂ ປະຈຳເຂດເລືອກຕັ້ງ11ເມືອງ; ໂດຍການເປັນປະທານຂອງທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມເປັນວິທະຍາກອນຮັບເຊີນຈາກສະພາແຫ່ງຊາດ ໂດຍມີທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ທ່ານ ສົງ ເລືອງວິຫານ ຫົວໜ້າກົມວຽກງານຊົນເຜົ່າ ກຳມາທິການບັນດາເຜົ່າ; ເຊິ່ງກອງປະຊຸມໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation).

ກອງປະຊຸມດັ່ງກ່າວ, ນັກວິທະຍາກອນໄດ້ຂຶ້ນສະເໜີບົດຮຽນກ່ຽວກັບ 3 ຫົວຂໍ້ຫຼັກໆ ຄື: ຄວາມຮູ້ພື້ນຖານກ່ຽວກັບຂໍ້ມູນທີ່ສຳຄັນ ແລະ ວິທີການຄົ້ນຄວ້າ ປະກອບຄຳເຫັນຕໍ່ກອງປະຊຸມ ສພຂ; ການຮ່າງມະຕິກອງປະຊຸມ ສພຂ ແລະ ສະຫຼຸບສັງລວມລາຍງານ; ການຊຸກຍູ້ຕິດຕາມກວດກາການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ພ້ອມນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ສົນທະນາແລະແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນຢ່າງມີຈຸດສຸມ, ກົງໄປກົງມາຕໍ່ບັນດາບົດຮຽນໃນແຕ່ລະຫົວຂໍ້ທີ່ວິທະຍາກອນໄດ້ນຳສະເໜີ.

ໃນຕອນທ້າຍ, ທ່ານ ລຳໄມ ກູດລາວົງ ໄດ້ມີຄຳຄິດເຫັນໂອ້ລົມວ່າ: ການເຝິກອົບຮົມຄັ້ງນີ້ສະແດງໃຫ້ເຫັນເຖິງຄວາມເປັນເອກະພາບ ແລະ ຄວາມຮັບຜິດຊອບສູງຂອງບັນດາທ່ານນັກສຳມະນາກອນທຸກໆທ່ານທີ່ມີຄວາມເອົາໃຈໃສ່ຮັບຟັງການນຳສະເໜີບົດຮຽນໃນແຕ່ລະຫົວຂໍ້, ໃຫ້ການຮ່ວມມືໃນການສົນທະນາ, ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນເຊິ່ງກັນ ແລະ ກັນ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງໃຫ້ບັນດາຜູ້ເຂົ້າຮ່ວມຈົ່ງນຳເອົາບົດຮຽນທີ່ໄດ້ຮຽນຮູ້ໃນເທື່ອນີ້ ໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງຕາມພາລະບົດບາດຂອງຕົນຮັບຜິດຊອບ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກ່ວາເກົ່າ.

**(ຄຳພັນ ໄຊຍະປະທຸມ)**

## ສສຊ ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງງອຍ ແຂວງຫຼວງພະບາງ

(ສພຊ) ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າ ໃຫ້ໄດ້ຮັບຮູ້, ເຂົ້າໃຈ ແລະ ນຳໄປຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງຢູ່ທ້ອງຖິ່ນຮາກຖານເມືອງ ແລະ ບ້ານ ໃນລະຫວ່າງວັນທີ 26-29 ກຸມພາ 2024 ທ່ານ ປອ. ກໍລະກັນ ພົມມະວົງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຢູ່5ບ້ານຄື: ໂພນໄຊ, ຫ້ວຍນາ, ຫ້ວຍທອງ, ຫ້ວຍໂງ່ນ ແລະ ຈອມຍົງ ເມືອງງອຍ ແຂວງຫຼວງພະບາງ.

ໂອກາດນີ້, ໄດ້ຮັບຟັງການລາຍງານສະພາບການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະບ້ານ ແລະ ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງປະຊາຊົນພາຍໃນບ້ານ 5 ບ້ານດັ່ງກ່າວ ເຊິ່ງເຫັນວ່າສະພາບເສດຖະກິດຂອງບ້ານ ຍັງຖືເອົາອາຊີບປູກຝັງແລະລ້ຽງສັດເປັນອາຊີບຕົ້ນຕໍ.

ທ່ານ ປອ. ກໍລະກັນ ພົມມະວົງ ໄດ້ໃຫ້ທິດຊີ້ນຳ ແລະ ຮຽກຮ້ອງໃຫ້ການປົກຄອງບ້ານ ແລະ ປະຊາຊົນບັນດາເຜົ່າ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ເປັນເຈົ້າການໃນການສຶກສາອົບຮົມລູກຫຼານໃຫ້ເປັນພົນລະເມືອງດີ, ເອົາໃຈໃສ່ຜະລິດສິນຄ້າກະສິກຳທີ່ເປັນທ່າແຮງຂອງບ້ານ ທີ່ເມືອງສົ່ງເສີມ ແລະ ມີຕະຫຼາດຮອງຮັບ. ສ່ວນຄຳສະເໜີຕ່າງໆເຫັນວ່າມີຄວາມສຳຄັນແລະຈຳເປັນແທ້ ສະນັ້ນ,ບ້ານຈະຕ້ອງເປັນເຈົ້າການຄົ້ນຄ້ວາ ແລະ ເລືອກບັນຫາທີ່ເຫັນວ່າມີຄວາມຈຳເປັນທີ່ສຸດເພື່ອສະເໜີເຖິງເມືອງແລະຂະແໜງການກ່ຽວຂ້ອງ ເພື່ອລົງຊຸກຍູ້ແລະຊອກຫາວິທີແກ້ໄຂ.

**(ຄຳດີ ພັນທະລີ)**



# ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຫຼວງພະບາງ



(ສພຊ) ເພື່ອເປັນການປະກອບສ່ວນ ໃນການສ້າງສາ ແລະ ພັດທະນາແຂວງຫຼວງພະບາງ ທັງເປັນການຊ່ວຍອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ວຽກງານໃຫ້ແກ່ສະມາຊິກສະພາປະຊາຊົນແຂວງໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ໃນວັນທີ 03-04 ມີນາ ທີ່ຜ່ານມານີ້, ທ່ານ ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມ ແລະເຮັດວຽກຢູ່ແຂວງຫຼວງພະບາງ; ໃນໂອກາດນີ້, ທ່ານຍັງໄດ້ຕາງໜ້າໃຫ້ທ່ານ ບຸນຍັງ ວໍລະຈິດອະດີດເລຂາທິການໃຫຍ່, ອະດີດປະທານປະເທດແຫ່ງ ສປປ ລາວ ມອບເງິນເບື້ອງຕົ້ນຈຳນວນ 1 ຕື້ກີບ ໃຫ້ສະພາປະຊາຊົນແຂວງ ນຳໄປມອບຕໍ່ ເພື່ອນຳໃຊ້ເຂົ້າໃນວຽກງານການທະລຸ ແລະກໍ່ສ້າງເສັ້ນທາງ ແຕ່ບ້ານກະຕ່າງສະເລື່ອງ, ເມືອງໂພນໄຊ ຫາບ້ານປາກແຟນ ເມືອງຊຽງເງິນ ແຂວງຫຼວງພະບາງ, ມອບເງິນປະກອບສ່ວນຊຸກຍູ້ວຽກງານໃຫ້ສະພາປະຊາຊົນແຂວງ ຈຳນວນ 1 ຮ້ອຍລ້ານກີບ ແລະ ມອບຜ້າຫົ່ມ ຈຳນວນ 200 ຜືນ ລວມມູນຄ່າ 30 ລ້ານກີບ ໃຫ້ປະຊາຊົນບ້ານປາກແຟນເມືອງຊຽງເງິນ ແຂວງຫຼວງພະບາງ.

ໃນໂອກາດນີ້, ທ່ານ ວົງສະຫວັນ ເທບພະຈັນ ຮອງເລຂາຄະນະບໍລິຫານງານພັກແຂວງ ປະທານສະພາປະຊາຊົນແຂວງ ໄດ້ຕາງໜ້າກ່າວຮັບເອົາ; ພ້ອມນັ້ນ, ທ່ານຍັງໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງທ່ານ ບຸນຍັງ ວໍລະຈິດ ອະດີດເລຂາທິການໃຫຍ່, ອະດີດປະທານປະເທດແຫ່ງ ສປປລາວ, ທ່ານອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະທີ່ໄດ້ຊຸກຍູ້ຊ່ວຍເຫຼືອແຂວງຫຼວງພະບາງ ກໍຄື ສະພາ ແລະ ປະຊາຊົນພາຍໃນແຂວງຫຼວງພະບາງ ເຊິ່ງການປະກອບສ່ວນໃນຄັ້ງນີ້, ເປັນການປະກອບສ່ວນທີ່ສຳຄັນ ແລະ ມີຄຸນຄ່າທີ່ສຸດ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ແລະ ການດຳລົງຊີວິດຂອງປະຊາຊົນ.

**(ຂ່າວ: ນາງ ຄຳຫຼ້າ ພອນພິລາ; ພາບ: ບຸນລັດ ສີວິໄລ)**

# ສສຊ ແຂວງຫຼວງພະບາງ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງພູຄູນ

(ສພຊ) ໃນລະຫວ່າງວັນທີ 13-16 ກຸມພາ 2024, ທ່ານ ປອ. ວົງເພັດ ອຸດົມລິດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຊຸດທີ II ຢູ່ເມືອງພູຄູນ ແຂວງຫຼວງພະບາງ ລວມມີ 7 ຈຸດຄື: ບ້ານພູຢາງ, ໂຮງຮຽນມັດທະຍົມຕົ້ນ ບ້ານພູຢາງ, ມັດທະຍົມສົມບູນບ້ານພູວຽງນ້ອຍ, ບ້ານພູສູງ, ບ້ານລ້ອງໝ້ຽງ, ບ້ານພູລັງຈັງ, ບ້ານແສນສີ ແລະຫ້ອງການສຶກສາທິການ ແລະ ກິລາເມືອງ.

ໂອກາດດັ່ງກ່າວ, ໄດ້ຮັບຟັງບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຕ່ລະບ້ານ ແລະ ພ້ອມທັງຮັບຟັງແຜນພັດທະນາວຽກງານການສຶກສາຂອງບັນດາບ້ານແລະໂຮງຮຽນ; ຈາກນັ້ນ, ທ່ານປອວົງເພັດອຸດົມລິດ ໄດ້ເຜີຍແຜ່ບັນດາເນື້ອໃນຈິດໃຈທີ່ສຳຄັນຂອງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ6ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ II ໂດຍທ່ານໄດ້ຍົກໃຫ້ເຫັນເຖິງຜົນສຳເລັດອັນພົ້ນເດັ່ນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນຖານະເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນ ແລະ ວິທີການແກ້ໄຂຄວາມຫຍຸ້ງຍາກທາງເສດຖະກິດ ແລະການເງິນ, ການແກ້ໄຂບັນຫາຢາເສບຕິດ ແລະປາກົດການຫຍໍ້ທໍ້ໃນສັງຄົມ, ການປະຕິບັດວຽກງານຈຸດສຸມຂອງຂະແໜງສຶກສາທິການ ແລະ ກິລາ ໃຫ້ບັນລຸຕາມຄາດໝາຍ; ທັງນີ້, ກໍເພື່ອເຮັດໃຫ້ພະນັກງານຫຼັກແຫຼ່ງ, ພະນັກງານລັດຖະກອນຕະຫຼອດຮອດພໍ່ແມ່ປະຊາຊົນ ໄດ້ຮັບຮູ້ ແລະເຂົ້າໃຈ ພາລະບົດບາດ ໃນການພິຈາລະນາ ແລະ ຮັບຮອງບັນຫາສຳຄັນຕ່າງໆຂອງຊາດ, ຂອງແຂວງ ເພື່ອເຮັດໃຫ້ການຄຸ້ມຄອງ-ບໍລິຫານລັດ, ຄຸ້ມຄອງສັງຄົມໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທຳຕໍ່ກັບຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ກໍໄດ້ຮັບການຊີ້ແຈງກັບທີ່ໄປແລ້ວຈຳນວນໜຶ່ງ, ສ່ວນບັນຫາທີ່ຍັງບໍ່ໄດ້ຮັບການຊີ້ແຈງ ແມ່ນຈະໄດ້ນຳໄປສົມທົບກັບພະແນກການ ແລະ ເມືອງ ເພື່ອຄົ້ນຄວ້າແກ້ໄຂຕາມຂັ້ນຕອນ.

ຫຼັງຈາກນັ້ນ, ຄະນະ ຍັງໄດ້ນຳເອົາເຄື່ອງນຸ່ງ (ເສື້ອກັນໜາວ) ຈຳນວນໜຶ່ງ ມອບໃຫ້ແຕ່ລະບ້ານ ເພື່ອນຳໄປຊ່ວຍເຫຼືອປະຊາຊົນຜູ້ທຸກຈົນ ລວມມູນຄ່າທັງໝົດ 33 ລ້ານກວ່າກີບ.

**(ເພັດສະໝອນ ທຳມຸງຄຸນ)**



# ມອບເສົາເຍືອງໄຟຟ້າໂຊລາເຊວ ໃຫ້ກອງຮ້ອຍທະຫານຊາຍແດນ 514




(ສພຊ) ວັນທີ 1 ມີນາ 2024, ທ່ານ ສີເຮັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ທັງເປັນປະທານສະພາປະຊາຊົນແຂວງສາລະວັນ ໄດ້ມອບເສົາເຍືອງໄຟຟ້າໂຊລາເຊວ ຈຳນວນ 3 ຕົ້ນ ມູນຄ່າ 26 ລ້ານກວ່າກີບ ໃຫ້ກອງຮ້ອຍທະຫານຊາຍແດນ 514 ເມືອງສະໝ້ອຍ ແຂວງສາລະວັນ; ພ້ອມນີ້, ຕາງໜ້າຄະນະນຳຂອງເມືອງໄດ້ສົມທົບມອບສັງກະສີ ຈຳນວນ 60 ແຜ່ນ ມູນຄ່າ 3 ລ້ານກວ່າກີບ ແລະ ເຄື່ອງບໍລິໂພກ ແລະ ເງິນສົດອີກຈຳນວນໜຶ່ງ, ໂດຍຊ້ອງໜ້າທ່ານພົຈວ.ພູວັນພົມມະຈັນ ຫົວໜ້າການເມືອງກອງບັນຊາການທະຫານແຂວງສາລະວັນ, ຮັບໂດຍທ່ານຮອ.ສົມໃຈ ມ້ອງວິໄລ ຫົວໜ້າການເມືອງຄ້າຍ 514, ເຂົ້າຮ່ວມພິທີມອບ-ຮັບໃນຄັ້ງນີ້ ມີທ່ານຮອງເຈົ້າເມືອງສະໝ້ອຍ, ສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງສະໝ້ອຍ, ຫົວໜ້າດ່ານສາກົນລະໄລ ແລະ ພະແນກການໂຍທາທິການ ແລະ ຂົນສົ່ງແຂວງ, ລັດວິສາຫະກິດໄຟຟ້າ, ນໍ້າປະປາ, ພ້ອມດ້ວຍນາຍ ແລະ ພົນທະຫານ ປະຈຳຊາຍແດນເຂົ້າຮ່ວມເປັນສັກຂີພິຍານ.

ທັງນີ້, ເພື່ອເປັນການຊ່ວຍເຫຼືອໃຫ້ກອງຮ້ອຍທະຫານຊາຍແດນ 514 ໄດ້ມີໄຟຟ້າສະຫວ່າງບໍລິເວນຄ້າຍ ສາມາດສັງເກດການ, ເວນຍາມມີຄວາມສະດວກ, ສາມາດປະຕິບັດໜ້າທີ່ປົກປັກຮັກສາອະທິປະໄຕ ຜືນແຜ່ນດິນອັນຄົບຖ້ວນ ແລະປົກປັກຮັກສາຫຼັກໝາຍຊາຍແດນ; ການປະກອບສ່ວນດັ່ງກ່າວແມ່ນສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງສະພາບການໃນປັດຈຸບັນ ເຊິ່ງໄດ້ສະແດງເຖິງສະຕິຕື່ນຕົວທາງການເມືອງ, ຄວາມເສຍສະຫຼະ, ຄວາມເອື້ອເຟື້ອເພື່ອແຜ່, ຄວາມເປັນຫ່ວງເປັນໄຍ, ຄວາມສາມັກຄີເປັນເອກະພາບ, ຄວາມເປັນແບບຢ່າງທີ່ດີ ແລະ ກາຍເປັນກຳລັງແຮງ-ກຳລັງໃຈອັນໃຫຍ່ຫຼວງ ໃຫ້ແກ່ກອງຮ້ອຍທະຫານຊາຍແດນ 514 ແລະ ປະຊາຊົນ ໂດຍສະເພາະພະນັກງານ-ນັກຮົບທີ່ພວມປະຕິບັດໜ້າທີ່ເປັນຮົ້ວຂອງຊາດ, ພ້ອມຈະນຳໃຊ້ເຄື່ອງຊ່ວຍເຫຼືອ ແລະ ເງິນດັ່ງກ່າວໃຫ້ຖືກກັບຈຸດປະສົງເປົ້າໝາຍ ແລະ ເກີດປະໂຫຍດສູງສຸດ.

ກອງຮ້ອຍທະຫານຊາຍແດນ 514 ເປັນຄ້າຍທີ່ຕັ້ງໃໝ່ ປີ 2023 ຍັງມີຄວາມຕ້ອງການອາຄານທີ່ພັກເຊົາເພີ່ມ, ຕ້ອງການລະບົບໄຟຟ້າ-ນໍ້າປະປາ, ອຸປະກອນຮັບໃຊ້ຄອມພິວເຕີ, ເຄື່ອງພິມ ແລະອື່ນໆອີກຈຳນວນໜຶ່ງ.

**(ດີລຳພົນ ພົມມະຈັນ)**






# ທຳມະສຳລັບນັກປົກຄອງ

**# ດັ້ນກົບເມກ**

ທ່ານຜູ້ອ່ານບາງຄົນ ອາດຄິດວ່າເປັນຜູ້ນຳ ຫຼື ນັກປົກຄອງ ຈຳເປັນບໍຕ້ອງມີທຳມະ ຫຼື ເຂົ້າໃຈວ່າການປະຕິບັດທຳມະເປັນຂອງຫຼ້າສະໄໝຢ່າລືມວ່າ: ທຳມະກໍຄຸນນະທຳ, ຄຸນສິນບັດ ຖ້າວ່າຄົນໃດຂາດຄຸນສົມບັດ ກໍຍາກທີ່ຈະໄດ້ຮັບຄວາມເຄົາລົບນັບຖືຈາກມະຫາຊົນ; ເລື່ອງທຳມະສຳລັບຜູ້ປົກຄອງທີ່ພະພຸດທະເຈົ້າສອນໄວ້ມີຫຼາຍຫົວຂໍ້ຫຼາຍລະດັບຊັ້ນຕົວຢ່າງ: ພົມວິຫານ 4 ຄື: ເມດຕາ, ກະລຸນາ, ມຸທິຕາ, ອຸເປກຂາ ກໍແມ່ນທຳມະຫຼັກຂັ້ນພື້ນຖານສຳຄັນສຳລັບຜູ້ປົກຄອງທຸກຄົນຕ້ອງມີ ແຕ່ກໍຍັງມີຫຼັກທຳມະຂໍ້ອື່ນທີ່ສຳຄັນ ຖ້າວ່າຜູ້ປົກຄອງຄົນໃດມີໃນໃຈ ລົງມືປະຕິບັດເປັນແນວທາງໃນໜ້າວຽກ ກໍຍິ່ງສ້າງຄວາມຍຸຕິທຳ-ສາມັກຄີທຳໃຫ້ເກີດຂຶ້ນໃນໝູ່ຄະນະ.

ຜູ້ຂຽນຂໍຍົກເອົາຄຸນນະທຳ (ທຳມະ) 10 ປະການທີ່ພະພຸດທະເຈົ້າສອນໃຫ້ຜູ້ປົກຄອງປະຕິບັດເປັນແບບຢ່າງໃຫ້ແກ່ມະຫາຊົນ ຄື: (1) ເປັນຜູ້ປົກຄອງຕ້ອງຮູ້ຈັກໃຫ້ທານ ເຊິ່ງອາດເປັນການໃຫ້ເພື່ອບູຊາຄຸນ ຫຼື ເພື່ອເປັນການອະນຸເຄາະ, ສົງເຄາະຜູ້ທຸກຈົນ (2) ຜູ້ປົກຄອງຕ້ອງມີສິນ ຮັກສາສິນ ບໍ່ລະເມີດ ຄືການຮັກສາ ກາຍວາຈາ ແລະ ໃຈໃຫ້ສະອາດ ບໍ່ລ່ວງລະເມີດກົດໝາຍ, ສິນທຳ ຮີດຄອງ ປະເພນີ. (3) ຜູ້ປົກຄອງຕ້ອງຮູ້ຈັກບໍລິຈາກຊັບເພື່ອເປັນການຊ່ວຍເຫຼືອສັງຄົມ ໃຫ້ມະຫາຊົນໄດ້ຮັບຄວາມສຸກ ຄວາມອົບອຸ່ນ. (4) ຜູ້ປົກຄອງຕ້ອງມີຄວາມຊື່ກົງ ໝັ້ນຄົງໃນຄວາມສຸດຈະລິດ ເອີ້ນວ່າອາດຊະວະ ຄື: ເຮັດໜ້າທີ່ສຸດຈະລິດ ປາສະຈາກໂທດ. (5) ຜູ້ປົກຄອງຕ້ອງເປັນຄົນມີອັດທະຍາໄສດີງາມ, ອ່ອນໂຍນສຸພາບເອີ້ນວ່າ: ມັດທະວະ. (6) ຜູ້ປົກຄອງຕ້ອງມີຄວາມອົດທົນ ບຳເພັນພຽນ ສ້າງແຕ່ຄວາມດີ ເອີ້ນວ່າ: ຕະບະ. (7) ຜູ້ປົກຄອງຕ້ອງມີສະຕິປັນຍາຮູ້ໂຕທຸກເມື່ອເພື່ອລະງັບກຳຈັດຄວາມໂກດຮ້າຍໃຫ້ໄດ້ບໍ່ແມ່ນຊີ້ສັ່ງຕາມໃຈຕາມອາລົມ ເຊິ່ງເອີ້ນວ່າ: ອະໂກທະ. (8) ຜູ້ປົກຄອງຕ້ອງມີຈິດໃຈເສຍສະຫຼະ, ເພື່ອແຜ່(ໃຈກ້ວາງ) ບໍ່ອິດສາເອີ້ນວ່າ: ອະວິຫິງສາ. (9) ຜູ້ປົກຄອງຕ້ອງມີຄວາມອົດທົນອົດກັ້ນ ບໍ່ປະພຶດຕາມອາລົມ, ບໍ່ປ່ອຍໄປຕາມກິເລດຄວາມຢາກໃນທາງບໍ່ຖືກຕ້ອງ. (10) ຜູ້ປົກຄອງຕ້ອງເປັນເສົາຫຼັກແຫ່ງຄວາມຍຸຕິທຳ.

ທຳມະ 10 ປະການນີ້ ທ່ານຜູ້ອ່ານລອງສັງເກດເບິ່ງວ່າ ຖ້າຜູ້ປົກຄອງລະເມີດຈະເປັນແນວໃດ? ຢ່າລືມວ່າຜູ້ເປັນຫົວໜ້າມີປາລະມີຫຼາຍ ເມື່ອເວົ້າຫຼືສັ່ງການອັນໃດກໍຈະມີຜົນກະທົບຕໍ່ມະຫາຊົນ ຈຶ່ງຈຳເປັນຕ້ອງມີທຳມະຄວບຄຸມຈິດໃຈ ແລະ ການປະພຶດ.




# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

5. ແກ້ໄຂ

ປະຊາທິປະໄຕ, ຫົວຄິດປະດິດສ້າງ, ຂະຫຍັນຫ້າວຫັນ: ສາມຄວາມເວົ້ານີ້ຜົວພັນເຊິ່ງກັນ ແລະ ກັນ ໃກ້ຊິດທີ່ສຸດ ມີປະຊາທິປະໄຕຈຶ່ງເຮັດໃຫ້ພະນັກງານ ແລະ ປະຊາຊົນກ້າສະເໜີຫົວຄິດປະດິດສ້າງຂອງຕົນ. ຫົວຄິດປະດິດສ້າງນັ້ນໄດ້ຮັບຄວາມສັນລະເສີນຈຶ່ງຈະເຮັດໃຫ້ມີຫົວຄິດປະດິດສ້າງຂະຫຍາຍຫ້າວຫັນຂຶ້ນອີກ ແລະ ຜູ້ອື່ນກໍຈະຮໍ່າຮຽນນຳຜູ້ນັ້ນຕໍ່ໄປ ເວລາເພີ່ມທະວີຄວາມຫ້າວຫັນເຮັດວຽກ ດັ່ງນັ້ນ ຂໍ້ຕົກລົງຂໍ້ບົກພ່ອງເລັກໆນ້ອຍໆກໍຈະຖືກແກ້ໄຂປ່ຽນແປງໄປໄດ້ຫຼາຍຢ່າງ.

ບັນຫາໜຶ່ງກໍຄື: ພວກເຮົາເຄີຍມັກເວົ້າເຖິງຫົວຄິດປະດິດສ້າງຢ່າງເຟີ້ຟັນ, ບໍ່ແທດເຖິງຄວາມຈິງເຊັ່ນວ່າຕ້ອງມີຄວາມເກັ່ງກ້າສາມາດພິເສດຈຶ່ງມີຫົວຄິດປະດິດສ້າງໄດ້ ຖ້າເຮົາລອງຖາມເບິ່ງວ່າຫົວຄິດປະດິດສ້າງແມ່ນຫຍັງ? ກໍຄົງຈະມີຫຼາຍຄົນຕອບບໍ່ຖືກ. ເມື່ອເປັນແນວນັ້ນ ຈະໄປຫວັງໃຫ້ພະນັກງານ ແລະ ສະມາຊິກພັກຂອງພັກມີຫົວຄິດປະດິດສ້າງແນວໃດໄດ້. ພວກເຮົາຕ້ອງຮັບຮູ້ວ່າຈະແມ່ນວຽກໃຫຍ່ ຫຼື ວຽກນ້ອຍແນວໃດກໍຕາມ ຖ້າຫາກວ່າເພີ່ມຜົນປະໂຫຍດຫຼຸດຜ່ອນຄວາມເສຍຫາຍໃຫ້ແກ່ປະຊາຊົນ, ຊ່ວຍປະຊາຊົນແກ້ໄຂຂໍ້ຫຍຸ້ງຍາກ, ເພີ່ມຜົນສຳເລັດໃຫ້ວຽກງານທີ່ເຮັດວຽກ: ເພີ່ມກຳລັງຜະລິດຜົນຂອງສັງຄົມ ຕີໂຕ່ນລົ້ມກຳລັງທີ່ກົດຂີ່ມປະຊາຊົນລົງໄດ້ ກໍລ້ວນແຕ່ແມ່ນຫົວຄິດປະດິດສ້າງທັງມວນ, ວິທີສອນໜັງສືຂອງນາຍຄູ ກ ດັ່ງເວົ້າມາເທິ່ງນັ້ນ ກໍແມ່ນຫົວຄິດປະດິດສ້າງ.

ອ່ານຕໍ່ສະບັບໜ້າ...




# ຊຸກຍູ້ – ສົ່ງເສີມ – ສະໜັບສະໜູນ

'ຊຸກຍູ້' ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ 'ຊຸກ' ທີ່ໝາຍເຖິງ "ເອົາມືຍູ້ຢ່າງແຮງໄປທາງໜ້າ" ແລະ 'ຍູ້' ໝາຍເຖິງ "ໃຊ້ມືຊຸກໄປທາງໜ້າ". ເມື່ອສອງຄຳນີ້ມາປະສົມຫຼືຊ້ອນເຂົ້າກັນເປັນ 'ຊຸກຍູ້' ກໍໝາຍເຖິງ "ພະຍາຍາມກະຕຸກ ຫຼືອອກແຮງຢ່າງໜັກເພື່ອໃຫ້ເກີດຜົນສຳເລັດຕາມທີ່ຕ້ອງການ" ເຊັ່ນ

- ຂັ້ນເທິງໄດ້ຊຸກຍູ້ໃຫ້ເກີດມີໂຄງການນີ້.
- ອາຈານເປັນຜູ້ຊຸກຍູ້ໃຫ້ເຮົາໄດ້ຮັບຜົນສຳເລັດໃນການຂຽນບົດວິທະຍານິພົນ.

ພ້ອມດຽວກັນນັ້ນ 'ຊຸກຍູ້' ຍັງມີຄວາມໝາຍວ່າ "ໃຫ້ການກະຕຸກ ເພື່ອໃຫ້ມີກຳລັງໃຈໃນການເຮັດວຽກ, ການຮຽນສືບຕໍ່ໄປ" ເຊັ່ນ

- ມື້ນີ້ຫົວໜ້າຊຸກຍູ້ສະມາຊິກດ້ວຍການລ້ຽງເຝີຜູ້ລະຖ້ວຍ.
- ພໍ່ແມ່ຊຸກຍູ້ລູກໃຫ້ມີກຳລັງໃຈຮໍ່າຮຽນຢູ່ມະຫາວິທະຍາໄລດ້ວຍການຊື້ຄອມພິວເຕີໜ່ວຍໃໝ່ໃຫ້.

'ສົ່ງເສີມ' ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ 'ສົ່ງ' ໝາຍເຖິງ "ຍື່ນໃຫ້, ມອບໃຫ້ໃສ່ມື" ແລະ 'ເສີມ' ໝາຍເຖິງ "ຕື່ມເຕີມ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ສົ່ງເສີມ' ກໍໝາຍເຖິງ "ເກື້ອກູນຍູ້ໜູນ, ຊຸກຍູ້ສະໜັບສະໜູນດ້ວຍຄວາມເຕັມໃຈ" ເຊັ່ນ

- ພໍ່ແມ່ສົ່ງເສີມລູກເຕົ້າໃນການສຶກສາຮໍ່າຮຽນ ເພື່ອໃຫ້ກາຍເປັນຜູ້ມີຄວາມຮູ້ສູງ.
- ສົ່ງເສີມ ນຳໃຊ້ ຜະລິດຕະພັນພາຍໃນ ຈະຊ່ວຍໃຫ້ເສດຖະກິດເຂັ້ມແຂງ.
- ທາງການລາວ ສົ່ງເສີມ ການປົກປັກຮັກສາ ສິ່ງແວດລ້ອມ ໃນໂຄງການ ບໍ່ແຮ່.
- ສະພາແຫ່ງຊາດຮັບຮອງເອົາຮ່າງກົດໝາຍວ່າດ້ວຍອະນາໄມ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ) ລາງເທື່ອກໍປາກົດເຫັນການໃຊ້ 'ຊຸກຍູ້' ຊ້ອນໃສ່ 'ສົ່ງເສີມ' ເປັນ ຊຸກຍູ້ສົ່ງເສີມ ເຊັ່ນ
- ລັດຖະບານ ໄດ້ຊຸກຍູ້-ສົ່ງເສີມ ແລະ ພັດທະນາຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈວນກ) ໃຫ້ມີຄວາມເຂັ້ມແຂງ ແນໃສ່ປະກອບສ່ວນເຮັດໃຫ້ເສດຖະກິດຂອງ ສປປ ລາວ

'ສະໜັບສະໜູນ' ເປັນຄຳກິລິຍາ ເຊິ່ງສ້າງຄຳມາຈາກ ສະໜັບ + ໜູນ ໂດຍນຳເອົາພະຍາງ 'ສະ' ມາເພີ່ມໃສ່ທາງໜ້າ 'ໜູນ' ເພື່ອໃຫ້ສຳຜັດກາຍເປັນຄຳໂຕງໂຕຍ 'ສະໜັບສະໜູນ' ໝາຍເຖິງ "ສົ່ງເສີມ, ຊ່ວຍເຫຼືອ, ອຸປະການະ" ເຊັ່ນ

- ນັກສຶກສາຫຼາຍຄົນໄດ້ຮັບທຶນສະໜັບສະໜູນຈາກລັດຖະບານ.
- ຜູ້ປົກຄອງນັກຮຽນຫຼາຍຄົນໄດ້ສະໜັບສະໜູນໂຮງຮຽນດ້ວຍການຊື້ເຄື່ອງກິລາ.
- ອົງການຈັດຕັ້ງທາງສັງຄົມ (PISCCA) ໄດ້ສະໜັບສະໜູນ 11 ໂຄງການພັດທະນາກະສິກຳແບບຍືນຍົງໃຫ້ແກ່ລາວໃນປີ 2023.
- ຜູ້ອຳນວຍການໃຫຍ່ຂອງອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ FAO ສະໜັບສະໜູນ ສປປ ລາວ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງຮອດປີ 2030.

ພ້ອມກັນນັ້ນ, ສະໜັບສະໜູນ ຍັງໝາຍເຖິງ "ເຫັນດີເຫັນພ້ອມນຳ" ເຊັ່ນ

- ສປປ ລາວ ສະໜັບສະໜູນ ຂໍ້ລິເລີ່ມກ່ຽວກັບຄວາມໝັ້ນຄົງທາງດ້ານຂໍ້ມູນຂ່າວສານສາກົນ.
- ພວກເຮົາທຸກຄົນຕ່າງກໍສະໜັບສະໜູນຄຳເຫັນຂອງຫົວໜ້າທີ່ໄດ້ສະເໜີຕໍ່ກອງປະຊຸມ.
- ຄຳດີໄດ້ຮັບສຽງສະໜັບສະໜູນຈາກສະມາຊິກໃນຫ້ອງຫຼາຍກວ່າໝູ່ ຈຶ່ງໄດ້ຮັບເລືອກເປັນຫົວໜ້າຫ້ອງ



# ຂຽນຄຳລາວໃຫ້ຖືກ

**# ຄູແສງ**

| ຄຳຖືກ | ຄຳຜິດ |
|---|---|
| ຂັດແຍ້ງ | ຂັດແຍ່ງ |
| ຍາດແຍ່ງ | ຍາດແຍ້ງ |
| ເພີ່ມພູນ | ເພີ້ມພູນ |
| ເລີ່ມຕົ້ນ | ເລີ້ມຕົ້ນ |
| ເລື່ອງສັ້ນ | ເລື້ອງສັ້ນ |
| ຊ່ຽວຊານ | ຊ້ຽວຊານ |
| ລ່າເນື້ອ | ລ້າເນື້ອ |
| ຫຼີກລ່ຽງ | ຫຼີກລ້ຽງ |



ສຸກສະບາຍທາຍໂລກາ

# 6 ວິທີກຳຈັດຕີນເໝັນດ້ວຍຕົວເອງ

ໂດຍ: ທິວກະທິ



**1. ແຊ່ຕີນໃນນ້ຳອຸ່ນປະສົມເກືອ.**

ເປັນວິທີການທີ່ງ່າຍ ແຕ່ໄດ້ຜົນດີເກີນຄາດ ກໍຄື ຕົ້ມນ້ຳໃຫ້ຟົດແລ້ວປະໄວ້ໃຫ້ເຢັນ ຈາກນັ້ນໃສ່ເກືອລົງໄປໃນນ້ຳທີ່ໄດ້ກຽມໄວ້ ແລ້ວກໍເອົາຕີນລົງໄປແຊ່ປະມານ 15-20 ນາທີ, ເຮັດຄືເກົ່າທຸກມື້ຈົນຄົບ 1 ເດືອນ ອາການຕີນເໝັນຈະທຸເລົາລົງໄດ້ ກິ່ນຈະໜ້ອຍລົງ ຫຼື ອາດຈະຫາຍໄປເລີຍກໍໄດ້.

**2. ແຊ່ໃນນ້ຳຢາເດກາຕອນ**

ຫາຊື້ນ້ຳຢາຂ້າເຊື້ອເດກາຕອນທີ່ເປັນກ່ອງສີສົ້ມໆມາ ໂດຍເອົາປະສົມກັບນ້ຳໃນຖັງ ຫຼື ຊາມທີ່ກຽມໄວ້ ເວລາແຊ່ກໍໃຫ້ເອົາແປງຖູເຮັດຄວາມສະອາດໄປພ້ອມໂດຍສະເພາະບໍລິເວນເລັບກັບງ່າມນິ້ວຕີນຕ້ອງຖູເປັນພິເສດ ເພາະວ່າເຊື້ອແບກເຕີເຣຍຈະຢູ່ໃນບໍລິເວນນີ້ຫຼາຍກວ່າໝູ່, ເຮັດແບບນີ້ທຸກມື້ກ່ອນເຂົ້ານອນຈະຊ່ວຍໃຫ້ເຊົາເໝັນໄດ້ຢ່າງແນ່ນອນ.

**3. ແຊ່ໃນນ້ຳຢາບ້ວນປາກ**

ເປັນອີກໜຶ່ງສູດໃນການແຊ່ຕີນເອົານ້ຳຢາບ້ວນປາກເທລົງປະສົມກັບນ້ຳປະມານ 2 ຝາ ແລ້ວກໍແຊ່ຕີນລົງໄປ (ດົນປານໃດກໍໄດ້ ແລ້ວແຕ່ມີເວລາ) ໃນນ້ຳຢາບ້ວນປາກຈະມີໂຕຢາທີ່ໃຊ້ກຳຈັດເຊື້ອແບກເຕີເຣຍ ຖ້າແຊ່ເປັນປະຈຳກໍຈະຊ່ວຍແກ້ບັນຫາຕີນເໝັນໄດ້ດີເຊັ່ນກັນ.

**4. ຖູດ້ວຍຫີນສົ້ມ**

ໃນເວລາອາບນ້ຳ ໃຫ້ເອົາຫີນສົ້ມຖູໃຫ້ທົ່ວ ທັງຝາຕີນ, ງ່າມຕີນແລະຫຼັງຕີນເປັນໂຕຊ່ວຍທີ່ດີເຊັ່ນກັນ ເພາະຫີນສົ້ມມີຄຸນສົມບັດລະງັບກິ່ນຢ່າງດີ ນອກຈາກເອົາມາກຳຈັດກິ່ນເໝັນຂອງຕີນແລ້ວ ຍັງສາມາດເອົາມາກຳຈັດກິ່ນໂຕເຊັ່ນ: ກິ່ນເຕົ່າ...

**5. ເກີບ ແລະ ຖົງຕີນ**

ຊັກເກີບ ຖ້າເປັນເກີບຄັດຊູທີ່ບໍ່ສາມາດຊັກໄດ້ກໍໃຫ້ເອົາໄປຕາກແດດເພື່ອກຳຈັດກິ່ນເໝັນ ແລະກໍຖືວ່າເປັນການຂ້າເຊື້ອແບກເຕີເຣຍໄປນຳ ຫຼື ປ່ຽນພື້ນຮອງເກີບ ກໍຈະຊ່ວຍໄດ້ຫຼາຍເລີຍ ສຳລັບຖົງຕີນໃຫ້ຊັກໃຫ້ສະອາດຕາກແດດໃຫ້ແຫ້ງດີເຊັ່ນກັນຢ່າໃສ່ຖົງຕີນຄູ່ເກົ່າຊ້ຳກັນຫຼາຍໆມື້.

**6. ເບກກິ້ງໂຊດາ**

ເບກກິ້ງໂຊດາຈະຊ່ວຍຂ້າເຊື້ອໂຣກ ແລະເຮັດຄວາມສະອາດໄປພ້ອມກັນ, ເບກກິ້ງໂຊດາ ຫຼື ຜົງຟູ ຫາຊື້ໄດ້ຕາມຮ້ານຄ້າທົ່ວໄປ ລາຄາກໍບໍ່ແພງຈະເປັນເມັດລະອຽດມີສີຂາວໆ ທີ່ເຮົາເອົາມາເຮັດຂະໜົມ ເຊັ່ນ: ສາລາເປົາ, ຂະໜົມສາລີແລະອື່ນໆ... ນຳມາປະສົມໃສ່ກັບນ້ຳພໍໃຫ້ຂຸ້ນໆແລ້ວນຳມາທາໃຫ້ທົ່ວຕີນ ແລະ ໃຊ້ແປງຖູໃຫ້ທົ່ວທຸກມູມຂອງຕີນຈົນແນ່ໃຈວ່າສະອາດດີແລ້ວ ພຽງເທົ່ານີ້ກິ່ນທີ່ບໍ່ປະສົງກໍຈະຫາຍໄປ.



ອາດ ກະວີລາວ

# 21 ມີນາ

\# ອານົງເດດ ສີງດາລັກ

❈ 21 ມີນາ ລືຊ່າກ້ອງ ໄປທົ່ວໂລກາ
ວັນທີ່ປວງປະຊາລາວ ມືດແສງສູນອ້ຳ
ສັດຕູກຳປືນແໜ້ນ ໂຈມຕີເຖິງຖິ່ນ
ສູນເສຍດິນບ່ອນບ້ານ ເຮືອນຊານຊິ້ນພັກເຊົາ

❈ ຈູດເຜົາຢ່າງໂຫດຮ້າຍ ເຂັ່ນຂູ່ປະຊາຊົນ
ຂົນກຳລັງໂຈມຕີ ຮຸກຮານທຳລາຍມ້າງ
ທາງທ່າແຂກຄົນກ້າ ມິຍອມເສຍເອກະລາດ
ເພື່ອຊາດພີ່ງພີ່ນ້ອງ ປອງດອງສູ້ບໍ່ຖອຍ

❈ ແຕ່ກຳລັງອ່ອນນ້ອຍ ເກີນກວ່າຊິທົນໄຫວ
ທ່າແຂກເລີຍເສຍໄຊ ພົບຄວາມເຈັບຊ້ຳ
ພວກມັນທຳລາຍມ້າງ ເຮືອນຫໍເຄີຍຢູ່
ຜູ້ນຳເຈັບແສບແຄ້ນ ປະຊາເສຍເລືອດເນື້ອ ລະທົມເສົ້າໂສກຊວງ ໜ່າຍເດ!

❈ ພວກຜີມານປ່ວງບ້າ ຍິງກວາດຝູງຊົນ
ດັບສູນຫຼາຍພັນຄົນ ແມ່ມານທັງແອນ້ອຍ
ເປັນກ່ຳພອຍໂຫຍໄຫ້ ຜົວເມຍຕາຍຈາກ
ເຫຼືອແຕ່ຊາກອັ່ງລົ້ນ ຟູຂຶ້ນເກື່ອນນະທີ

❈ 21 ມີນາແມ່ນມື້ ຝັງເລິກຊວງໃນ
ບໍ່ມີໃຜລືມຫຼົງ ລົບເລືອນລົງໄດ້
ກາຍເປັນທອນໄຟແຈ້ງ ເຍືອງທາງໃສສ່ອງ
ໄຂປ່ອງທາງບອກຊີ້ ປະຊາລາວຮັກຊາດເຊື້ອ ບໍ່ຍອມຂຶ້ນແກ່ໃຜ

❈ 21 ມີນາຈາລຶກໄວ້ ປະຫວັດສາດແດນລາວ
ເປັນແວ່ນແຍງຊາວເມືອງ ທີ່ເກີດລຸນຫຼັງນີ້
ສາມັກຄີສ້າງ ພັດທະນາປະເທດຊາດ
ສອງໜ້າທີ່ຍຸດທະສາດຈຳຈີ່ໝັ້ນ ໃນເບື້ອງໜ່ວຍມະໂນ ນັ້ນທ້ອນ!



ຫົກທາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສາວຈົ້ມ

❈ ***"ຊາວ"*** *ອົງການ* ***ຢູແນັສໂກ*** *ໄດ້ຮັບຮອງເອົາທັດຖະກຳ* ***ພູມປັນຍາການຕຳລາຍບາກ****ຂອງຊຸມຊົນເຊື້ອຊາດລາວ ເຂົ້າ****ເປັນມໍລະດົກວັດທະນະທຳ****ຢ່າງເປັນທາງການແລະປະກາດຮັບໃບຢັ້ງຢືນ ເພື່ອຮັບຮອງເອົາຜົນງານດັ່ງກ່າວ ທີ່ສູນມໍລະດົກໂລກ* ***ແຫ່ງປາຣີ*** *ປະເທດ****ຝຣັ່ງ*** *ຕັ້ງແຕ່ຕອນບ່າຍ* ***28 ກຸມພາຜ່ານມາ*** *ຊໍ່ຊົມເຊີຍຍົກຍ້ອງຄວາມຄິດພູມປັນຍາ ຂອງປະຊາຊົນລາວ ແຕ່ເດີມດາກໍ້ຈົນມາເຖິງວັນນີ້ ຜົນງານຄຶກຮອງຮັບ ເປັນມໍລະດົກເອກອ້າງ ສາກົນຮູ້ທົ່ວເຖິງ* ***ຊົມເຊີຍ!***

❈ ***8 ມີນາ****ຜ່ານພົ້ນ ຫຼາຍຄົນຫ່ຽວສຸກສັນ ວັນແມ່ຍິງສາກົນ ທົ່ວແຫ່ງຫົນທ່າທ້ອງ ສະຫຼອງກິດຈະກຳອ້າງ ວັນບາງນາມແມ່ ໂລກາທອນຮັບຮູ້ ສະຫຼອງຫຼີ້ນຄຶກຄະນອງ* ***ເປັນແນວໃດພີ່ນ້ອງ*** *ນາມແມ່ທັງຫຼາຍ* ***ມີທ່ານຊາຍເອົາໃຈ*** *ຫຼືຍື່ນຂອງຂວັນຕ້ອນ* ***ບໍ່ບໍ!*** *ຂໍໃຫ້ຍິງທັງຫຼ້າ ໃນໂລກາສຸກສະຫງ່າ ສົມຫວັງທັງລາບລົ້ນ ຍືນໝັ້ນຊໍ່ວບີລັບ* ***ເທາະເນີ!***

ຊວນຍິ້ມ

\# ແອ່ນຕຸ້ງ

## ເລື່ອງ: ບໍ່ໄດ້

ທີ່ໂຮງຮຽນເຂດຫ່າງໄກສອກຫຼີກແຫ່ງໜຶ່ງ ຫ້ອງ ປ3 ມີນັກຮຽນ 25 ຄົນ ແລະ ໃນມື້ນີ້ກໍພາກັນມາສວາຍໝົດທຸກຄົນ ຄູຈຶ່ງຖາມນັກຮຽນວ່າ "ເປັນຫຍັງຄືພາກັນມາສວາຍແທ້".

ນັກຮຽນຄົນທີ 1 ຕອບວ່າ: ບ້ານຫຼານຢູ່ໄກ ຈຶ່ງໄດ້ຂີ່ຄວາຍມາ ມື້ວານນີ້ຄວາຍບໍ່ສະບາຍ ຫຼານຂີ່ມັນມາ ເຊົ້ານີ້ມັນເລີຍຕາຍກາງທາງ ຫຼານເລີຍໄດ້ຍ່າງມາ ຈຶ່ງຮອດໂຮງຮຽນສວາຍ.

ຫຼັງຈາກນັ້ນ, ນັກຮຽນທັງ 23 ຄົນ ກໍຕອບແບບດຽວກັນໝົດ ເຫຼືອແຕ່ຜູ້ສຸດທ້າຍ ລາວກຳລັງຊິຕອບ ແຕ່ສາວຄູບອກວ່າ "ບໍ່ເປັນຫຍັງ ຂ້ອຍຮູ້ຄຳຕອບແລ້ວ" ແຕ່ເດັກຊາຍກໍຕອບວ່າ: ບໍ່ໄດ້!!!!!! ຄວາຍຫຼານບໍ່ໄດ້ຕາຍ ແຕ່ຫຼານຕ້ອງຂີ່ຄວາຍຫຼີກຊ້າຍຫຼີກຂວາ ຄວາຍ 24 ໂຕທີ່ຕາຍ ຫຼານຈຶ່ງມາຮອດໂຮງຮຽນສວາຍ.



ຄະຕິເຕືອນໃຈ

\# ດອກຫຍ້າ

ຢ່າໄດ້ຫ່າໂຕພ້ຽງ ຫ້ວພຽງສະເໝີອື່ງ
ມັນຫາກເຫຼືອແຕ່ຮ້ອງ ຕາຍຍ້ອນປາກໂຕ

ລັດຖະສະພາຕ່າງປະເທດ

# ອີຣານເລືອກຕັ້ງສະມາຊິກ 2 ສະພາ



ສຳນັກຂ່າວ IRNA ຂອງທາງການລາຍງານວ່າ: ການລົງຄະແນນສຽງເລືອກຕັ້ງສະມາຊິກສະພາທີ່ປຶກສາອິດສະລາມ (Islamic Consultative Assembly) ຫຼື ລັດຖະສະພາຊຸດທີ XII ແລະ ສະພາຜູ້ຊ່ຽວຊານ (Assembly of Experts) ຊຸດທີ VI ຂອງອີຣານ ໄດ້ສິ້ນສຸດລົງໃນເວລາ 00:00 ໂມງ (ຕາມເວລາທ້ອງຖິ່ນ) ຂອງວັນເສົາທີ 02 ມີນາຜ່ານມາ ຫຼັງຈາກ 16 ຊົ່ວໂມງຕິດຕໍ່ກັນ.

ການລົງຄະແນນສຽງໄດ້ເລີ່ມຂຶ້ນໃນເວລາ 08:00 ໂມງເຊົ້າຂອງວັນສຸກ ທີ່ໜ່ວຍປ່ອນບັດເລືອກຕັ້ງ 59.000 ແຫ່ງໃນທົ່ວປະເທດ ໂດຍມີຜູ້ສະໝັກ 15.000 ກວ່າທ່ານ ແຂ່ງຂັນກັນເພື່ອຍາດເອົາ 290 ທີ່ນັ່ງໃນລັດຖະສະພາ ເຊິ່ງມີວາລະ 4 ປີ ແລະ ຜູ້ສະໝັກ 144 ທ່ານ ແຂ່ງຂັນກັນເພື່ອຍາດເອົາຕຳແໜ່ງໃນສະພາຜູ້ຊ່ຽວຊານ ເຊິ່ງມີວາລະ 8 ປີ, ອົງການທີ່ມີສະມາຊິກ 88 ທ່ານ ທີ່ຮັບຜິດຊອບການເຄື່ອນໄຫວຂອງຜູ້ນຳສູງສຸດຂອງອີຣານ ແລະ ມີອຳນາດໃນການແຕ່ງຕັ້ງ ແລະ ປົດຕຳແໜ່ງຜູ້ນຳສູງສຸດ.

ຫ້ອງການການເລືອກຕັ້ງ ທີ່ຂຶ້ນກັບກະຊວງພາຍໃນຂອງອີຣານ ໃຫ້ຮູ້ວ່າ: ມີ 61,17 ລ້ານຄົນ, ໃນນັ້ນ ຜູ້ຊາຍ 30,94 ລ້ານຄົນ ແລະ ແມ່ຍິງ 30,22 ລ້ານຄົນ ມີສິດລົງຄະແນນສຽງໃນສອງການເລືອກຕັ້ງຄັ້ງນີ້.

ການລົງຄະແນນສຽງໃນເບື້ອງຕົ້ນໄດ້ກຳນົດຈະສິ້ນສຸດລົງໃນເວລາ 18:00 ໂມງແລງ, ແຕ່ໄດ້ຂະຫຍາຍເວລາອອກໄປສາມຄັ້ງ ໂດຍແຕ່ລະຄັ້ງເປັນເວລາສອງຊົ່ວໂມງ.

ທ່ານ ອາລີ ຄາເມເນອີ (Ali Khamenei) ຜູ້ນຳສູງສຸດຂອງອີຣານ ໄດ້ໄປໃຊ້ສິດລົງຄະແນນສຽງຢູ່ໜ່ວຍປ່ອນບັດແຫ່ງໜຶ່ງໃນນະຄອນຫຼວງເຕເຮຣານ ທັນທີຫຼັງຈາກການລົງຄະແນນສຽງເລີ່ມຂຶ້ນ, ຂະນະທີ່ທ່ານ ເອບຣາຮິມ ໄຣຊີ (Ebrahim Raisi) ປະທານາທິບໍດີອີຣານ ໄດ້ໃຊ້ສິດລົງຄະແນນສຽງໃນເວລາ 09:55 ໂມງ ທີ່ຕຶກກະຊວງພາຍໃນ.

**ແຫຼ່ງຂ່າວ: ຊິນຮົວ**

# ຝຣັ່ງ ເປັນປະເທດທຳອິດທີ່ບັນຍັດ "ສິດການເອົາລູກອອກ" ໃນລັດຖະທຳມະນູນ



Article unique

Après le dix-septième alinéa de l'article 34 de la Constitution, il est inséré un alinéa ainsi rédigé :

« La loi détermine les conditions dans lesquelles s'exerce la liberté garantie à la femme d'avoir recours à une interruption volontaire de grossesse. »

*Délibéré en séance publique, à Versailles, le 4 mars 2024.*

*La Présidente,*

**ເອກະສານຂອງລັດຖະສະພາຝຣັ່ງ ຮັບຮອງການປັບປຸງລັດຖະທຳມະນູນ ໃຫ້ລະບຸເພີ່ມຕື່ມກ່ຽວກັບ "ສິດ ແລະ ເສລີພາບການເອົາລູກອອກ"**

ກອງປະຊຸມວາລະພິເສດ ເມື່ອວັນຈັນທີ 04 ມີນາ 2024 ທີ່ພະລາຊະວັງແວກຊາຍ (Versailles) ລັດຖະສະພາຝຣັ່ງ ໄດ້ລົງມະຕິດ້ວຍຄະແນນສຽງສ່ວນຫຼາຍຢ່າງລົ້ນເຫຼືອ 780 ຕໍ່ 72 ສຽງ ເຫັນດີໃຫ້ປັບປຸງເນື້ອໃນມາດຕາ 34 ຂອງລັດຖະທຳມະນູນສະບັບປີ 1958 ໂດຍໃຫ້ລະບຸເພີ່ມຕື່ມວ່າ: "ການເອົາລູກອອກ ເປັນສິດ ແລະ ເສລີພາບຕາມລັດຖະທຳມະນູນ".

ເຖິງແມ່ນວ່າການເອົາລູກອອກ ຫຼື ການແທ້ງລູກ (Abortion) ຖືກກົດໝາຍໃນປະເທດຝຣັ່ງນັບຕັ້ງແຕ່ປີ 1975, ແຕ່ຜົນສຳຫຼວດຄວາມຄິດເຫັນຂອງປະຊາຊົນກ່ຽວກັບເລື່ອງນີ້ຄັ້ງຫຼ້າສຸດເມື່ອເດືອນພະຈິກປີຜ່ານມາ ພົບວ່າ 86% ຂອງກຸ່ມຕົວຢ່າງ ຕ້ອງການໃຫ້ມີການບັນຍັດຢ່າງຈະແຈ້ງໃນລັດຖະທຳມະນູນ ເຮັດໃຫ້ຝຣັ່ງເປັນປະເທດທຳອິດໃນໂລກ ທີ່ມີການລະບຸສິດການເອົາລູກອອກໄວ້ໃນກົດໝາຍສູງສຸດຂອງປະເທດ.

ການບັນຍັດສິດການເອົາລູກອອກ ຖືເປັນການປັບປຸງຄັ້ງທີ 25 ຂອງລັດຖະທຳມະນູນສະບັບປັດຈຸບັນ ແລະ ເປັນຄັ້ງທຳອິດນັບຕັ້ງແຕ່ປີ 2008.

**ແຫຼ່ງຂ່າວ: AFP**

# ພັກປະຊາຊົນກຳປູເຈຍ ຍາດໄດ້ 55 ທີ່ນັ່ງໃນສະພາສູງ



**ສະມາຊິກສະພາຊຸມຊົນໃນແຂວງກອນຕູມ, ທາງພາກໃຕ້ຂອງກຳປູເຈຍ ເຂົ້າແຖວລໍຖ້າໃຊ້ສິດເລືອກຕັ້ງສະມາຊິກສະພາສູງ ທີ່ໜ່ວຍປ່ອນບັດແຫ່ງໜຶ່ງ**

ຕາມເວັບໄຊຂ່າວສານຊິນຮົວ, ເມື່ອວັນອັງຄານທີ 05 ມີນາ 2024 ຄະນະກຳມະການການເລືອກຕັ້ງແຫ່ງຊາດຫຼືເອັນອີຊີ (National Election Committee-NEC) ໄດ້ປະກາດຜົນຢ່າງເປັນທາງການຂອງການເລືອກຕັ້ງສະມາຊິກສະພາສູງກຳປູເຈຍ ຊຸດທີ V ທີ່ຈັດຂຶ້ນເມື່ອວັນທີ 25 ກຸມພາຜ່ານມາ ເຊິ່ງມີ 4 ພັກການເມືອງເຂົ້າຮ່ວມ, ປາກົດວ່າ: ພັກປະຊາຊົນກຳປູເຈຍ ຫຼື ຊີພີພີ (Cambodian People's Party-CPP) ທີ່ເປັນລັດຖະບານ ຍາດໄດ້ 55 ຈາກ 58 ທີ່ນັ່ງ, ພັກເຈດຈຳນົງຂະເໝນ (Khmer Will Party) ໄດ້ 3 ທີ່ນັ່ງ, ຂະນະທີ່ພັກພະລັງຊາດ (Nation Power Party) ແລະ ພັກຟຸນຊິນເປັກ (Funcinpec) ບໍ່ໄດ້ຈັກທີ່ນັ່ງ.

ທ່ານ ສົກ ອາຍສານ (Sok Eysan) ໂຄສົກຂອງພັກ ຊີພີພີ ກ່າວຕໍ່ຂ່າວສານຊິນຮົວວ່າ: ຜົນໄດ້ຮັບສະແດງໃຫ້ເຫັນວ່າ ພັກ ຊີພີພີ ຍັງເຂັ້ມແຂງ ແລະ ບໍ່ມີພັກໃດສາມາດເອົາຊະນະໄດ້, ນີ້ແມ່ນຄວາມສຳເລັດອັນໃຫຍ່ຫຼວງອີກຄັ້ງຂອງພັກ ຫຼັງຈາກພວກເຮົາໄດ້ຮັບໄຊຊະນະຢ່າງລົ້ນເຫຼືອໃນການເລືອກຕັ້ງທົ່ວໄປເມື່ອເດືອນກໍລະກົດ 2023.

ທ່ານ ອາຍສານ ຢືນຢັນວ່າ ອະດີດນາຍົກລັດຖະມົນຕີ ສົມເດັດອັກຄະມະຫາເສນາບໍດີເຕໂຈ ຮຸນເຊນ (Samdech Akka Moha Sena Padei Techo Hun Sen) ອາຍຸ 71 ປີ ທີ່ເປັນຫົວໜ້າພັກປະຊາຊົນກຳປູເຈຍ ເຊິ່ງໄດ້ຮັບການເລືອກຕັ້ງ ຈະຖືກສະເໜີຊື່ໃຫ້ດຳລົງຕຳແໜ່ງປະທານສະພາສູງ.

ການເລືອກຕັ້ງສະມາຊິກສະພາສູງ ຫຼື ວຸດທິສະພາ ຈັດຂຶ້ນທຸກໆ 6 ປີ ໂດຍຜູ້ມີສິດປ່ອນບັດລົງຄະແນນສຽງ ແມ່ນສະມາຊິກສະພາແຫ່ງຊາດ ຫຼື ສະພາຕໍ່າ 125 ທ່ານ ແລະ ສະມາຊິກສະພາຊຸມຊົນ (Commune Council) ໃນທົ່ວປະເທດ 11.622 ທ່ານ; ສະພາສູງມີທັງໝົດ 62 ທີ່ນັ່ງ, ມາຈາກການເລືອກ 58 ທີ່ນັ່ງ, ໃນຂະນະທີ່ 2 ທີ່ນັ່ງ ຈະຖືກແຕ່ງຕັ້ງໂດຍກະສັດ ນະໂຣດົມ ສີຫະມຸນີ (Norodom Sihamoni) ແລະ ອີກ 2 ທີ່ນັ່ງ ມາຈາກການລົງຄະແນນສຽງ ໂດຍສະພາແຫ່ງຊາດ.

ວັນສຸກທີ 01 ມີນາຜ່ານມາ, ສະພາແຫ່ງຊາດໄດ້ແຕ່ງຕັ້ງສະມາຊິກພັກ ຊີພີພີ ສອງທ່ານ ຄື: ທ່ານ ສົກ ອາຍສານ ແລະ ທ່ານ ເຮງ ຮາລິມ (Heng Halim) ທີ່ປຶກສາຂອງທ່ານ ຮຸນເຊນ ເປັນສະມາຊິກສະພາສູງ.

ອີງຕາມຂໍ້ມູນຂອງ NEC, ຜູ້ມີສິດເລືອກຕັ້ງ 11.730 ທ່ານ ຫຼື 99,86 ສ່ວນຮ້ອຍ ໃນຈຳນວນທັງໝົດ 11.747 ທ່ານ ໄດ້ລົງຄະແນນສຽງໃນການເລືອກຕັ້ງຄັ້ງນີ້ ຢູ່ໜ່ວຍປ່ອນບັດ 33 ແຫ່ງໃນທົ່ວປະເທດ.

# ນາຍົກລັດຖະມົນຕີກຣົວຊີ ປະກາດຍຸບສະພາພາຍໃນວັນທີ 22 ມີນານີ້



ທ່ານ ອັນເດຣດ ເປລນໂຄວິດ (Andrej Plenkovic) ນາຍົກລັດຖະມົນຕີກຣົວຊີ ປະກາດເມື່ອວັນຈັນທີ 04 ມີນາຜ່ານມາວ່າ ລັດຖະສະພາຈະຖືກຍຸບບໍ່ເກີນວັນທີ 22 ມີນານີ້.

ທ່ານ ເປລນໂຄວິດ ເຊິ່ງເປັນປະທານພັກສະຫະພັນປະຊາທິປະໄຕກຣົວຊີ (Croatian Democratic Union) ພັກກຳອຳນາດ ຍັງໄດ້ກ່າວອີກວ່າ: ປະທານາທິບໍດີ ໂຊຣານ ມິລາໂນວິດ (Zoran Milanovic) ສາມາດຮຽກຮ້ອງໃຫ້ມີການເລືອກຕັ້ງລັດຖະສະພາໄດ້ພາຍໃນ 30 ຫາ 60 ວັນ ຫຼັງຈາກການຍຸບສະພາ.

ການເລືອກຕັ້ງຈະຈັດຂຶ້ນກ່ອນການເລືອກຕັ້ງລັດຖະສະພາເອີຣົບ ທີ່ຈະຈັດຂຶ້ນໃນວັນທີ 06-09 ມິຖຸນານີ້, ທ່ານກ່າວ ພ້ອມທັງເສີມວ່າ: ການຕັດສິນໃຈເຫຼົ່ານີ້ ໄດ້ຮັບການເຫັນດີຈາກບັນດາພັກພັນທະມິດຮ່ວມລັດຖະບານ.

ທ່ານ ເປລນໂຄວິດ ເປັນນາຍົກລັດຖະມົນຕີກຣົວຊີ ນັບຕັ້ງແຕ່ເດືອນຕຸລາ 2016 ແລະ ກາຍເປັນນາຍົກລັດຖະມົນຕີທີ່ດຳລົງຕຳແໜ່ງຍາວນານທີ່ສຸດຂອງປະເທດ ນັບຕັ້ງແຕ່ການເລືອກຕັ້ງຫຼາຍພັກການເມືອງຄັ້ງທຳອິດໃນປີ 1990.

**ແຫຼ່ງຂ່າວ: ຊິນຮົວ**

ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ບັນຫາຢາເສບຕິດ ແລະ ລໍຫ້າມໃຊ້ໂທລະສັບມືຖື

ເລື່ອງເລົ່າໃນຄໍລຳປະຈຳວັນນີ້ ພົວພັນກັບມາດຕະການຄວບຄຸມຢາເສບຕິດ ຢູ່ປະເທດໄທ ແລະ ເລື່ອງບັນຫາການໃຊ້ໂທລະສັບມືຖືໃນຫ້ອງຮຽນຢູ່ບາງປະເທດຕາມລາຍລະອຽດດັ່ງລຸ່ມນີ້.

ມາດຕະການຄວບຄຸມຢາເສບຕິດ ແຫຼ່ງຂ່າວຕ່າງປະເທດ ໄດ້ໃຫ້ຮູ້ຫວ່າງບໍ່ດົນມານີ້ (ວຽງຈັນທາມ 13 ກຸມພາ 2024) ວ່າ ທາງການໄທໄດ້ເພີ່ມມາດຕະການເຂັ້ມຂຸ້ນ ແລະ ເດັດຂາດໃນສະໜາມຮົບກຳຈັດຢາເສບຕິດ ພາຍຫຼັງໄດ້ມີສຽງວິພາກວິຈານຈາກສັງຄົມວ່າ ລັດຖະບານໄທຊຸດປັດຈຸບັນ ບໍ່ເດັດຂາດໃນການຈັດການກັບບັນຫານີ້. ຂ່າວບອກວ່າ ທ່ານ ເສດຖາ ທະວີສິນ ນາຍົກລັດຖະມົນຕີໄທ ໄດ້ສັ່ງການໃຫ້ຜູ້ບັນຊາການຕຳຫຼວດສູງສຸດເພີ່ມຂີດຄວາມສາມາດໃນການປາບປາມຢາເສບຕິດເຊິ່ງຍັງເປັນວາລະແຫ່ງຊາດທີ່ຕ້ອງປະຕິບັດໃຫ້ສຳເລັດ. ທ່ານນາຍົກເວົ້າວ່າໃນປັດຈຸບັນ ການຈັບກຸມຜູ້ມີຄວາມຜິດໃນຄະດີຢາເສບຕິດ ໄດ້ເພີ່ມຂຶ້ນ 4 ເທົ່າ ແຕ່ລາຄາຢາເສບຕິດຍັງບໍ່ແພງຂຶ້ນ ນີ້ສະແດງວ່າຢາເສບຕິດຍັງມີຖົມເຖໄປ ດັ່ງນັ້ນ, ການປາບປາມຈຶ່ງຕ້ອງສືບຕໍ່. ໃນການກຳນົດຄວາມຜິດທີ່ພົວພັນກັບຢາເສບຕິດນັ້ນ ທາງກະຊວງສາທາລະນະສຸກໄທ ໄດ້ລະບຸໄວ້ວ່າ ຜູ້ທີ່ຖືກພົບວ່າ ມີຢາບ້າໄວ້ໃນການຄອບຄອງກາຍ5ເມັດຂຶ້ນໄປຈະຕ້ອງຖືກຕັດສິນວ່າເປັນຜູ້ຄ້າ, ຫຼຸດຈາກອັດຕາກຳນົດ 10 ເມັດ ທີ່ກຳນົດວ່າເປັນຜູ້ຄ້າໃນເມື່ອກ່ອນ. ສ່ວນຜູ້ທີ່ມີຢາບ້າແຕ່ 5 ເມັດ ລົງໄປຈະຖືກຕັດສິນວ່າເປັນຜູ້ເສບ ແລະ ຈະຖືກສົ່ງເຂົ້າສູນບຳບັດ. ທາງສຽງສັງຄົມໄທຍັງເຫັນວ່າການກຳນົດວ່າໃຜເປັນຜູ້ຄ້າ-ໃຜເປັນຜູ້ເສບແບບນີ້ ຈະກາຍເປັນຊ່ອງວ່າງໃຫ້ຜູ້ຄ້າຢາເສບຕິດ ປອມໂຕເປັນຜູ້ເສບໄດ້ງ່າຍຂຶ້ນ. ກ່ຽວກັບບັນຫານີ້ ທ່ານ ນາຍົກ ເສດຖາ ທະວີສິນ ບອກວ່າຈະບໍ່ອະນຸຍາດ ໃຫ້ໃຜມີຢາເສບຕິດ ໄວ້ໃນຄອບຄອງແມ່ນແຕ່ເມັດດຽວ... ນອກຈາກນັ້ນ, ຍັງຈະເລັ່ງລັດຂະບວນການຈູດທຳລາຍຢາເສບຕິດທີ່ຍຶດມາໄດ້ທັງນີ້ກໍເພື່ອປ້ອງກັນບໍ່ໃຫ້ຖືກລັກລອບເອົາໄປຈຳໜ່າຍໂດຍພະນັກງານສໍ້ລາດບັງຫຼວງ.

ບັນຫາການໃຊ້ໂທລະສັບມືຖືໃນຫ້ອງຮຽນ ມີຂ່າວຈາກປະເທດ ນູແວນເຊລັງ (ນິວຊີແລນ) ໃນທ້າຍປີ 2023 ວ່າ ທາງການຂອງປະເທດນີ້ມີແຜນອອກມາດຕະການຫ້າມການໃຊ້ໂທລະສັບມືຖືພາຍໃນຫ້ອງຮຽນແນວຄວາມຄິດດັ່ງກ່າວ ໄດ້ມາຈາກຜົນການສຳຫຼວດ ບຸກຄົນເປົ້າໝາຍ ຈຳນວນ 1.481 ຄົນ ລະຫວ່າງວັນທີ 10-16 ພະຈິກ 2023 ກ່ຽວກັບຜົນດີ-ຜົນເສຍ ຈາກການໃຊ້ ໂທລະສັບມືຖືໃນຫ້ອງຮຽນໂດຍນັກຮຽນ.ຜົນສະຫຼຸບອອກມາວ່າ61% ເຫັນດີກັບ ແຜນຫ້າມນຳໃຊ້ໂທລະສັບມືຖືໃນຫ້ອງຮຽນ ແຕ່ບອກວ່າ ຄວນອະນຸຍາດໃຫ້ໃຊ້ເວລາພັກຜ່ອນ (ເລີກຫຼິ້ນ). ຜູ້ນຳນິວຊີແລນ ໂດຍສະເພາະແມ່ນທ່ານນາຍົກຄຣິສໂຕເຟີລັກຊອນ ນັ້ນເຫັນວ່າ ການຫ້າມໃຊ້ໂທລະສັບມືຖືໃນຫ້ອງຮຽນ ຈະຊ່ວຍໃຫ້ນັກຮຽນມີສະມາທິ ແລະ ຕັ້ງອົກຕັ້ງໃຈໃສ່ບົດຮຽນ ແລະ ຈະເຮັດໃຫ້ຄວາມສາມາດໃນການອ່ານອອກຂຽນເປັນຂອງນັກຮຽນດີຂຶ້ນ.ເລື່ອງການໃຊ້ໂທລະສັບມືຖື ໃນຫ້ອງຮຽນນີ້ ຫຼາຍປະເທດມີຄວາມກັງວົນໃຈແລະຊອກວິທີແກ້ໄຂໃຫ້ເໝາະສົມ ເຊັ່ນ ໃນປີ 2018, ທາງການປະເທດຝຣັ່ງ ກໍໄດ້ເອົາມາດຕະການເຂັ້ມງວດ ດ້ວຍການຫ້າມນັກຮຽນຂັ້ນປະຖົມ-ມັດທະຍົມຕົ້ນໃຊ້ໂທລະສັບມືຖືໃນຫ້ອງຮຽນ ໂດຍອ້າງເຫດຜົນວ່າ ມັນຈະເຮັດໃຫ້ນັກຮຽນເສຍສະມາທິ,ບໍ່ເອົາໃຈໃສ່ຕໍ່ຄຳອະທິບາຍ ຂອງຄູ-ອາຈານ. ມາດຕະການຫ້າມນີ້ ໜັກກວ່າຢູ່ ນູແວນເຊລັງ ຄືເວລາພັກຜ່ອນກໍຫ້າມໃຊ້ແຕ່ນັກຮຽນສາມາດຖືໂທລະສັບໄປໂຮງຮຽນໄດ້ ເພື່ອໃຊ້ໃນເວລາຈຳເປັນເພື່ອຕິດຕໍ່ທາງຄອບຄົວເທົ່ານັ້ນ. ຢູ່ປະເທດອີຕາລີ, ມາດຕະການຫ້າມໃຊ້ໂທລະສັບມືຖືໃນຫ້ອງຮຽນ ໄດ້ເລີ່ມປະຕິບັດມາແຕ່ເດືອນທັນວາ 2022 ໂດຍມີເຫດຜົນວ່າ ອຸປະກອນສື່ສານນີ້ ຈະລົບກວນການຮຽນຮູ້ ແລະ ຈະເຮັດໃຫ້ນັກຮຽນຫຼຸດຄວາມສົນໃຈຕໍ່ການສອນຂອງຄູ-ອາຈານແຕ່ກໍມີຂໍ້ຍົກເວັ້ນຄືມີການອະນຸຍາດໃຫ້ນັກຮຽນໃຊ້ໂທລະສັບມືຖືໄດ້ສະເພາະກັບບົດຮຽນທີ່ກ່ຽວຂ້ອງເທົ່ານັ້ນ ຫຼັງຈາກນີ້ ອຸປະກອນນີ້ກໍຈະຖືກຄູເກັບມ້ຽນໄວ້.




## ຂາວ ແລະ ດຳ

*# ບ່າວກະບື*

ໃນງານແຕ່ງດອງ,ເດັກນ້ອຍຊາຍແນມເບິ່ງຜູ້ເປັນແມ່ແລະຖາມວ່າ: “ແມ່ໆເປັນຫຍັງເຈົ້າສາວຈຶ່ງນຸ່ງຊຸດຂາວ?”

ແມ່ຕອບວ່າ: “ເຈົ້າສາວນຸ່ງຊຸດຂາວ ກໍເພາະວ່ານາງມີຄວາມສຸກ ແລະ ນີ້ມັນແມ່ນວັນທີ່ນາງມີຄວາມສຸກທີ່ສຸດໃນຊີວິດ”.

ເດັກຊາຍຄິດຫງຸ່ມງ່ຽວກັບເລື່ອງນີ້ ແລະ ຕໍ່ມາເຈິ່ງຖາມຕື່ມວ່າ: “ເອີ່ ຄັນຊັ້ນ ເປັນຫຍັງເຈົ້າບ່າວຈຶ່ງໃສ່ຊຸດສີດຳ?”.

## SUICIDE

*# BAOKBU*

A little boy, at a wedding looks at his mom and says, “Momy, why does the girl wear white?”

His mom replies, “The bride is in white because she's happy and this is the happiest day of her life”. The boy thinks about this, and then asks, “Well then, why is the groom wearing black?”

## ສະພານແຫ່ງຊາດ...

(ຕໍ່ຈາກໜ້າ 1)

ກຳມາທິການຍຸຕິທຳ, ກຳມາທິການການຕ່າງປະເທດແລະຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ; ແຕ່ງຕັ້ງ, ຍົກຍ້າຍຫົວໜ້າກົມ ແລະ ປະກາດແຕ່ງຕັ້ງຕຳແໜ່ງບໍລິຫານປະເພດ 3 (ຮອງຫົວໜ້າກົມ), ປະເພດ 4 ແລະ 5 (ຫົວໜ້າ, ຮອງຫົວໜ້າພະແນກ) ຈຳນວນໜຶ່ງ.

ໂອກາດນີ້, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນເນັ້ນໜັກໃຫ້ຄະນະພັກສະພາແຫ່ງຊາດ, ຄະນະພັກຮາກຖານ,ໜ່ວຍພັກຮາກຖານ,ໜ່ວຍພັກ ສືບຕໍ່ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກສະພາແຫ່ງຊາດ ກໍຄືທິດທາງແຜນການເຄື່ອນໄຫວທ້າຍສະໄໝຂອງອົງຄະນະພັກສະພາແຫ່ງຊາດ; ບັນດາຮາກຖານພັກສະພາແຫ່ງຊາດ ຕ້ອງໄດ້ເອົາໃຈໃສ່ວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງເປັນປົກກະຕິຕໍ່ເນື່ອງ ເພື່ອເປັນເອກະພາບຕໍ່ແນວທາງນະໂຍບາຍຂອງພັກກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງລັດ, ກົດລະບຽບຂອງພັກ, ມະຕິຄຳສັ່ງຂອງຂັ້ນເທິງ ແຕ່ລະໄລຍະ ແນໃສ່ເຮັດໃຫ້ພະນັກງານ, ສະມາຊິກພັກມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄວາມກະຕືລືລົ້ນຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ; ເອົາໃຈໃສ່ແກ້ໄຂບັນດາປາກົດການຫຍໍ້ທໍ້ໃນຖັນແຖວພະນັກງານ, ສະມາຊິກພັກ ໃຫ້ເຂັ້ມງວດ, ຂາດຕົວ ແລະ ທັນການ; ສືບຕໍ່ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ສອດຄ່ອງກັບນິຕິກຳຂອງພັກ-ລັດທີ່ວາງອອກ, ເອົາໃຈໃສ່ກວດກາຄືນການແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນຄະນະພັກ, ມອບໜ້າທີ່ໃຫ້ພະນັກງານ, ສະມາຊິກພັກ ສອດຄ່ອງຕາມຄວາມຮູ້ ຄວາມສາມາດ ແລະ ຕຳແໜ່ງງານທີ່ກະຊວງພາຍໃນໄດ້ຮັບຮອງ; ເອົາໃຈໃສ່ປັບປຸງແບບແຜນນຳພາ, ວິທີເຮັດວຽກ ໃຫ້ມີປະສິດທິພາບປະສິດທິຜົນສູງກວ່າເກົ່າ ໂດຍມີກົນໄກສະຫຼຸບລາຍງານ, ປຶກສາຫາລືເປັນໝູ່ຄະນະ ຕາມຫຼັກການລວມສູນປະຊາທິປະໄຕ; ຄະນະພັກ, ໜ່ວຍພັກ ຕ້ອງເອົາໃຈໃສ່ກໍ່ສ້າງຖັນແຖວສະມາຊິກພັກ, ພະນັກງານ-ລັດຖະກອນດ້ວຍຫຼາຍຮູບການ, ພະນັກງານ-ລັດຖະກອນເອງ ກໍຕ້ອງໄດ້ບຸກບືນຕົວ, ຊອກຮູ້ຮ່ຳຮຽນແນວທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຕ່າງໆ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່ການ ເມືອງທີ່ການຈັດຕັ້ງມອບໝາຍໃຫ້; ການສ້າງພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຕິດພັນກັບການແຂ່ງຂັນຮັກຊາດ ແລະພັດທະນາ ໃຫ້ມີຄຸນນະພາບ, ຕີລາຄາປະເພດສະມາຊິກພັກ, ປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນປະຈຳປີຕາມລະບຽບການ, ຄັດເລືອກຜູ້ທີ່ດີເດັ່ນເພື່ອຈັດການຍ້ອງຍໍປະຈຳປີໃຫ້ເໝາະ ຫຼີກເວັ້ນການຕີລາຄາປະເມີນແບບສະເລ່ຍເອົາໃຈກັນ.

ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວຕື່ມວ່າ: ການຍົກຍ້າຍສັບປ່ຽນໜ້າທີ່, ການແຕ່ງຕັ້ງບັນດາສະຫາຍມາຮັບໜ້າທີ່ໃໝ່ຢູ່ສະພາແຫ່ງຊາດເປັນເລື່ອງປົກກະຕິໃນການປັບປຸງກົງຈັກການຈັດຕັ້ງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ ແລະ ແມ່ນຫຼັກການອັນໜຶ່ງຂອງພັກເຮົາໃນວຽກພະນັກງານ ເພື່ອປະຕິບັດຕາມທິດການຈັດວາງສັບຊ້ອນພະນັກງານ ມີຂຶ້ນ, ມີລົງ, ມີເຂົ້າ, ມີອອກ ແລະ ການສັບປ່ຽນດັ່ງກ່າວ ເປັນການເພີ່ມກຳລັງແຮງໃຫ້ແກ່ສະພາແຫ່ງຊາດໃນການປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ມີປະສິດທິຜົນດີຂຶ້ນຕື່ມ.

**(ຂ່າວ: ນາງ ກຸກກິກ ບຸດດາໄຊ, ພາບ: ສອນສັກ ວັນວິໄຊ)**

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ
ທ່ານ ສົງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ